

PetroTrade

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ເອກະສານລາຍງານການເງິນ
ສຳລັບ 3 ເດືອນທີ່ສິ້ນສຸດມະຈັນທ໌ 31 ມີນາ 2016

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະອຳນວຍການ	3
ໃບສະຫຼຸບຊັບສິນບັດ ສຳລັບ 3 ເດືອນຕົ້ນປີ	4-5
ໃບລາຍງານຜົນໄດ້ຮັບ ສຳລັບ 3 ເດືອນຕົ້ນປີ	6
ໃບລາຍງານການປ່ຽນແປງຂອງທຶນ ສຳລັບ 3 ເດືອນຕົ້ນປີ	7
ໃບລາຍງານກະແສເງິນສົດ ສຳລັບ 3 ເດືອນຕົ້ນປີ	8-9
ເອກະສານຊ້ອນທ້າຍເອກະສານລາຍງານການເງິນ ສຳລັບ 3 ເດືອນຕົ້ນປີ	10 – 31

PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ 856 21 264834-5 ແຟັກ: 856(21) 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R. Tel: 856 21 264834-5, Fax: 856(21) 264836

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ"), ຊື່ໃນເບື້ອກ່ອນແມ່ນບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ຈຳກັດ, ແມ່ນບໍລິສັດທີ່ດຳເນີນທຸລະກິດພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 0458, ອອກໃຫ້ໂດຍ ຫ້ອງການທະບຽນວິສາຫະກິດ, ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008 ແລະ ຕໍ່ມາໄດ້ປັບປຸງ ແລະ ອອກໃບທະບຽນໃໝ່ ເລກທີ 508 ລົງວັນທີ 5 ທັນວາ 2014 ອອກໃຫ້ໂດຍຫ້ອງການທະບຽນວິສາຫະກິດ, ພະແນກຄຸ້ມຄອງທະບຽນວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.

ອີງຕາມໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 508 ລົງວັນທີ 05 ທັນວາ 2014 ຂອງພະແນກຄຸ້ມຄອງທະບຽນວິສາຫະກິດ ຂອງກະຊວງອຸດສາຫະກຳແລະການຄ້າ ແລະ ໃບອະນຸຍາດເລກທີ 005 ລົງວັນທີ 26 ພະຈິກ 2014 ຂອງຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ບໍລິສັດໄດ້ຮັບການອະນຸມັດໃຫ້ເພີ່ມຮຸ້ນຈາກ 350 ຕື້ກີບ ມາເປັນ 470 ຕື້ກີບ ແລະ ຈົດທະບຽນຮຸ້ນສາມັນທັງໝົດເຂົ້າໃນຕະຫຼາດຫຼັກຊັບລາວ.

ສຳນັກງານຂອງບໍລິສັດຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ໃນປັດຈຸບັນ ບໍລິສັດມີສາງເກັບນ້ຳມັນ 5 ແຫ່ງ ເຊິ່ງຕັ້ງຢູ່ ນະຄອນຫຼວງວຽງຈັນ, ແຂວງ ບໍລິຄຳໄຊ, ແຂວງ ສະຫວັນນະເຂດ, ແຂວງ ໄຊຍະບຸລີ ແລະ ແຂວງ ຈຳປາສັກ, ສປປ ລາວ.

ກິດຈະກຳຫຼັກຂອງບໍລິສັດແມ່ນ ຂາຍ ແລະ ເປັນຜູ້ສະໜອງນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງໃຫ້ແກ່ຕະຫຼາດພາຍໃນປະເທດ.

ສະພາບໍລິຫານ
ສະມາຊິກຂອງສະພາບໍລິຫານພາຍໃນປີ ຈົນເຖິງວັນທີອອກເອກະສານລາຍງານສະບັບນີ້ແມ່ນ:

ທ່ານ ຫວ່າງ ອັຕຕະນະວົງ	ປະທານ (*)
ທ່ານ ນາງ ສະຫວັນທອງ ພົງສະຫວັນ	ຮອງປະທານ
ທ່ານ ຈັນທອນ ສິດທິໄຊ	ຮອງປະທານ
ທ່ານ ນາງ ດາລີ ພິນເສນາ	ຄະນະອຳນວຍການ (*)
ທ່ານ ໝູພັນ ມະຫາພົນ	ຄະນະອຳນວຍການ (*)
ທ່ານ ນາງ ຈັນທະຄອມ ເມກສະຫວັນ	ຄະນະອຳນວຍການ
ທ່ານ ບຸນຖຸ້ນ ຈິດຕະວົງ	ຄະນະອຳນວຍການ
ທ່ານ ໄພໄຊ ຈັນທະວົງສາ	ຄະນະອຳນວຍການ
ທ່ານ ວຽງຄອນ ສິດທິໄຊ	ຄະນະອຳນວຍການ

(*) ອຳນວຍການຈາກພາຍນອກ.

ຂໍ້ມູນທົ່ວໄປ (ຕໍ່)

ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານຂອງບໍລິສັດພາຍໃນປີ ແລະ ນະວັນທີ່ອອກເອກະສານລາຍງານການເງິນສະບັບນີ້ມີ:

ທ່ານ ຈັນທອນ ສິດທິໄຊ,	ຜູ້ອຳນວຍການໃຫຍ່ບໍລິສັດ
ທ່ານ ນາງ ຈັນທະດອນ ເມກສະຫວັນ	ຮັກສາການຫົວໜ້າຝ່າຍການເງິນ
ທ່ານ ໄພໄຊ ຈັນທະວົງສາ	ຜູ້ອຳນວຍການຝ່າຍກວດສອບພາຍໃນ
ທ່ານ ບຸນຖັນ ຈິດຕະວົງ	ຜູ້ອຳນວຍການຝ່າຍປະຕິບັດການ
ທ່ານ ຕະກູນສິນ ຊາພັກດີ	ອຳນວຍການຝ່າຍການຄ້າ
ທ່ານ ບຸນຍືນ ດວງສອນ	ອຳນວຍການຝ່າຍບໍລິຫານ
ທ່ານ ນາງ ແສງເດືອນ ກ້ຽວສຸຫວັດ	ອຳນວຍການຝ່າຍການບັນຊີ - ການເງິນ

ຄະນະກຳມະການກວດສອບ

ສະມາຊິກຂອງຄະນະກຳມະການກວດສອບພາຍໃນປີ ແລະ ນະວັນທີ ທີ່ອອກເອກະສານລາຍງານສະບັບນີ້ແມ່ນ:

ທ່ານ ທ່ວງ ອັດຕະນະວົງ	ປະທານ
ທ່ານ ນາງ ດາລີ ພົນເສນາ	ຮອງປະທານ
ທ່ານ ໜູພັນ ມະຫາພົນ	ສະມາຊິກ

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດພາຍໃນປີ ແລະ ນະວັນທີ່ທີ່ອອກເອກະສານລາຍງານການເງິນແມ່ນ ທ່ານ ຈັນທອນ ສິດທິໄຊ, ຮອງປະທານ ແລະ ຜູ້ອຳນວຍການໃຫຍ່.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ບໍລິສັດ ປິໂຕຣລ້ຽມ ເທຣດດິ້ງ ລາວ ມະຫາຊົນ (ຊື່ໃນເມື່ອກ່ອນແມ່ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ຈຳກັດ) (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ພ້ອມທັງເອກະສານລາຍງານການເງິນຂອງ ບໍລິສັດ ສຳລັບ 3 ເດືອນທີ່ສິ້ນສຸດນະວັນທີ 31 ມີນາ 2016.

ຄຳຖະແຫຼງການຂອງຄະນະອຳນວຍການກ່ຽວກັບຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນສຳລັບ 3 ເດືອນ

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີ, ເຊິ່ງຈະຕ້ອງກະກຽມໂດຍອີງຕາມນະໂຍບາຍການບັນຊີຕາມທີ່ໄດ້ລະບຸໃນເອກະສານຊ້ອນທ້າຍ 3 ຂອງເອກະສານລາຍງານການເງິນສຳລັບ 3ເດືອນຕົ້ນປີທີ່ຄັດຕິດມາກັບບົດລາຍງານສະບັບນີ້. ນະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນທຸລະກິດ ແລະ ກະແສເງິນສົດຂອງບໍລິສັດ ຕາມຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ໃນການກະກຽມເອກະສານລາຍງານການເງິນສຳລັບ 9 ເດືອນຕົ້ນປີ, ຄະນະອຳນວຍການຕ້ອງ:

- ເລືອກເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສອດຄ່ອງ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ການລະເມີດທີ່ສຳຄັນຕໍ່ກັບມາດຕະຖານການບັນຊີ ຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍໃນເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີ; ແລະ
- ກະກຽມເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີ ບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ນັບແຕ່ໃນກໍລະນີທີ່ ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າທຸລະກິດ ຈະບໍ່ສາມາດດຳເນີນຕໍ່ໄປໄດ້.

ຄະນະຜູ້ອຳນວຍການມີຄວາມຮັບຜິດຊອບໃນການຮັບປະກັນວ່າບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ນັ້ນ ໄດ້ສະແດງເຖິງຄວາມຖືກຕ້ອງຢ່າງເໝາະສົມຢູ່ຕະຫຼອດເວລາກ່ຽວກັບຖານະການເງິນຂອງບໍລິສັດໃນມື້ທີ່ປິດບັນຊີ ພ້ອມທັງຮັບປະກັນວ່າເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີໄດ້ສອດຄ່ອງກັບຫຼັກການທາງດ້ານບັນຊີທີ່ເໝາະສົມ. ຜູ້ອຳນວຍການມີຄວາມຮັບຜິດຊອບໃນການຮັກສາຊັບສິນຂອງບໍລິສັດ ແລະ ຕ້ອງມີຂັ້ນຕອນທີ່ເໝາະສົມໃນການປ້ອງກັນ ແລະ ຊອກຫາຄວາມບໍ່ໂປ່ງໃສ ແລະ ສິ່ງຜິດປົກກະຕິອື່ນໆ.

ຄະນະຜູ້ອຳນວຍການຢັ້ງຢືນວ່າບໍລິສັດໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ໄດ້ຄັດມາກັບບົດລາຍງານສະບັບນີ້.

ການອະນຸມັດເອກະສານລາຍງານການເງິນ

ພວກຂ້າພະເຈົ້າ ຕົກລົງເຫັນດີອະນຸມັດຮັບຮອງເອົາເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນທີ່ສິ້ນສຸດນະວັນທີ 31 ມີນາ 2016 ທີ່ໄດ້ຖືກກະກຽມອີງຕາມນະໂຍບາຍການບັນຊີທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ເລກທີ 3 ຂອງເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີ.

ລົງນາມໂດຍ ຄະນະອຳນວຍການ:

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ Petroleum Trading Lao Public Company

ທອງຫິນ ລັ່ນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່ບໍລິສັດ

ນະຄອນຫຼວງວຽງຈັນ, ສປປ ລາວ
10 ພຶດສະພາ 2016

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ໃບສະຫຼຸບຊັບສິນບັດ ສຳລັບ 3 ເດືອນຕົ້ນປີ
ນະວັນທີ 31 ມີນາ 2016

ສະກຸນເງິນ: ກີບ

	ເອກະສານ ຊ້ອນທ້າຍ	*31 ມີນາ 2016*	*31 ທັນວາ 2015*
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ	4	59,546,123,215	74,657,189,719
ການລົງທຶນໄລຍະສັ້ນ	5	11,727,093,359	11,727,093,359
ໜີ້ຕ້ອງຮັບການຄ້າ	6	105,429,868,837	98,642,692,232
ເງິນລ່ວງໜ້າໃຫ້ຜູ້ສະໜອງ		3,754,727,018	4,953,370,656
ໜີ້ຕ້ອງຮັບອື່ນໆ	7	45,228,983,902	40,194,690,016
ເຄື່ອງໃນສາງ	8	11,320,309,284	11,317,649,677
ຊັບສິນໝຸນວຽນອື່ນໆ	9	33,294,168,602	21,144,186,338
		270,301,274,217	**262,636,871,997**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ມີຕົວຕົນ	10	113,705,998,789	113,459,945,114
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	11	132,432,332,926	132,661,107,070
ການລົງທຶນໃນຊັບສິນບັດຄົງທີ່	12	157,477,535,396	152,575,976,414
ຊັບສິນບັດຄົງທີ່ພວມພະລຶດ	13	23,524,549,061	16,261,139,486
ການລົງທຶນໄລຍະຍາວ	14	16,749,572,212	16,749,572,212
ໜີ້ຕ້ອງຮັບໄລຍະຍາວອື່ນໆ	15	22,763,448,559	20,355,129,514
		466,653,436,943	**452,062,869,810**
ຊັບສິນທັງໝົດ		**736,954,711,160**	**714,699,741,807**

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ໃບສະຫຼຸບຊັບສິນບັດ ສຳລັບ 3 ເດືອນຕົ້ນປີ (ຕໍ່)
ນະວັນທີ 31 ມີນາ 2016

ສະກຸນເງິນ: ກີບ

	ເອກະສານຊ້ອນທ້າຍ	31 ມີນາ 2016	31 ທັນວາ 2015
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ເງິນກູ້ ແລະ ການກູ້ຢືມໄລຍະສັ້ນ	16	124,154,603,357	119,244,814,122
ໜີ້ຕ້ອງສົ່ງທາງການຄ້າ	17	24,503,742,981	16,901,236,157
ເງິນລ່ວງໜ້າຈາກລູກຄ້າ		702,203,558	555,256,210
ໜີ້ຕ້ອງສົ່ງອາກອນ	18	10,480,153,059	7,814,428,781
ໜີ້ຄ້າງຈ່າຍ		5,700,000	2,920,001
ໜີ້ຕ້ອງສົ່ງອື່ນໆ	19	1,063,788,942	210,063,091
		160,910,191,897	**144,728,718,362**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ໄລຍະຍາວ	20	56,000,000,000	56,000,000,000
		56,000,000,000	**56,000,000,000**
ທຶນ	*21*		
ທຶນຈົດທະບຽນ		470,000,000,000	470,000,000,000
ຄ້ຳແຮສ່ວນເພີ່ມມູນຄ່າຮຸ້ນ		27,638,932,340	27,638,932,340
ກຳໄລສະສົມ		22,405,586,923	16,332,091,105
		520,044,519,263	**513,971,023,445**
ລວມໜີ້ສິນ ແລະ ທຶນ		**736,954,711,160**	**714,699,741,807**

ທ່ານ ຈັນທະດອນ ເມກສະຫວັນ
ຜູ້ອຳນວຍການຝ່າຍການເງິນ

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່ບໍລິສັດ

10 ພຶດສະພາ 2016

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບ ສຳລັບ 3 ເດືອນຕົ້ນປີ
ສຳລັບໄລຍະ 3 ເດືອນ ສິ້ນສຸດວັນທີ 31 ມີນາ 2016

	ເອກະສານ ຊ້ອນທ້າຍ	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	ສະກຸນເງິນ: ກີບ ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015
ລາຍຮັບ	22	201,695,920,543	195,174,892,409
ຕົ້ນທຶນຂາຍ	23	(174,468,567,173)	(165,737,012,002)
ລວມຍອດກຳໄລ		**27,227,353,370**	**29,437,880,407**
ລາຍຮັບອື່ນໆ	24	-	18,880,152,194
ລາຍຈ່າຍໃນການບໍລິຫານ		(11,241,260,640)	(24,902,467,975)
ລາຍຈ່າຍຈາກການຂາຍ		(5,841,007,953)	(4,504,262,078)
ລາຍຈ່າຍອື່ນໆ	25	(310,000)	(617,762)
ກຳໄລຈາກການດຳເນີນງານ		**10,144,774,777**	**18,910,684,786**
ລາຍຮັບການເງິນ	26	1,954,668,429	2,454,609,877
ລາຍຈ່າຍການເງິນ	27	(4,601,300,221)	(3,539,860,859)
ກຳໄລກ່ອນອາກອນ		**7,498,142,985**	**17,825,433,804**
ອາກອນກຳໄລ	28	(1,424,647,167)	(3,386,832,422)
ກຳໄລຫລັງອາກອນ		**6,073,495,818**	**14,438,601,382**
ລາຍຮັບຕໍ່ຮຸ້ນ			
ແບບພື້ນຖານ	*30*	*26*	*61*
ແບບປັບຫຼຸດ	*30*	*26*	*61*

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຈັນທະດອນ ເມກສະຫວັນ
ຜູ້ອຳນວຍການຝ່າຍການເງິນ

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່ບໍລິສັດ

10 ພຶດສະພາ 2016

ໃບລາຍງານສ່ວນປ່ຽນແປງຂອງທຶນ ສຳລັບ 3 ເດືອນຕົ້ນປີ
ນະວັນທີ ແລະ ສຳລັບໄລຍະ 3 ເດືອນ ສິ້ນສຸດ ວັນທີ 31 ມີນາ 2016

ສະກຸນເງິນ: ກີບ

	ທຶນຈົດທະບຽນ ທີ່ຖອກແລ້ວ	ທຶນຈົດທະບຽນ ທີ່ຍັງບໍ່ໄດ້ຖອກ	ກຳໄລສ່ວນເພີ່ມມູນຄ່າຍຸດ	ກຳໄລທີ່ຍັງບໍ່ໄດ້ແບ່ງປັນ	ລວມ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2015 - ກວດສອບແລ້ວ					
ຍອດຍົກມາ	470,000,000,000	-	27,638,932,340	19,772,679,791	517,411,612,131
ກຳໄລພາຍໃນປີ	-	-	-	22,644,411,314	22,644,411,314
ຈ່າຍເງິນປັນຜົນ	-	-	-	(26,085,000,000)	(26,085,000,000)
ຍອດເຫຼືອທ້າຍປີ	**470,000,000,000**	**-**	**27,638,932,340**	**16,332,091,105**	**513,971,023,445**
ສຳລັບປີທີ່ສິ້ນສຸດ ວັນທີ 31 ມີນາ 2016 - ກ່ອນການກວດສອບ					
ຍອດຍົກມາ	470,000,000,000	-	27,638,932,340	16,332,091,105	513,971,023,445
ກຳໄລພາຍໃນປີ	-	-	-	6,073,495,818	6,073,495,818
ເງິນປັນຜົນ		-	-	-	-
ຍອດເຫຼືອທ້າຍປີ	**470,000,000,000**	**-**	**27,638,932,340**	**22,405,586,923**	**520,044,519,263**

ທ່ານ ຈັນທະດອນ ເມກສະຫວັນ
ຜູ້ອຳນວຍການຝ່າຍການເງິນ

10 ພຶດສະພາ 2016

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່ບໍລິສັດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ໃບລາຍງານກະແສເງິນສົດ ສຳລັບ 3 ເດືອນຕົ້ນປີ
ສຳລັບ 3 ເດືອນ ສິ້ນສຸດວັນທີ 31 ມີນາ 2016

ສະກຸນເງິນ: ກີບ

	ເລກະ ສາມອ້ອນ ທ້າຍ	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016*	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**7,498,142,985**	**28,356,163,355**
ລາຍການດັດແກ້:			
ຫັກຄ່າຫຼ້ຽຫ້ຽນຂອງຊັບສິນບັດດິ່ງທີ່ມີຕົວຕົນ	10,11, 12	8,018,951,328	14,989,124,453
ດ້ງແຂສຳລັບໜີ້ສົງໄລ		-	1,705,689,492
ກຳໄລຈາກກິດຈະກຳການລົງທຶນ		(635,481,617)	(4,479,495,740)
ລາຍຈ່າຍດອກເບ້ຍ	27	3,936,094,145	13,370,684,565
ກຳໄລຈາກການດຳເນີນງານກ່ອນການປ່ຽນແປ່ງຂອງທຶນໃນ ການດຳເນີນງານ		**18,817,706,841**	**53,942,166,125**
(ເພີ່ມຂຶ້ນ)/ຫຼຸດລົງ ຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(29,357,204,532)	(40,411,704,339)
(ເພີ່ມຂຶ້ນ)/ຫຼຸດລົງ ຂອງເຄື່ອງໃນສາງ		(2,659,607)	464,647,738
ເພີ່ມຂຶ້ນຂອງລາຍຈ່າຍລ່ວງໜ້າ		(2,408,319,045)	(13,924,812,829)
ດອກເບ້ຍທີ່ໄດ້ຮັບ		6,312,603,552	6,312,603,552
ດອກເບ້ຍທີ່ໄດ້ຈ່າຍ		(3,855,256,172)	(14,482,535,147)
ອາກອນກຳໄລທີ່ໄດ້ຈ່າຍແລ້ວ	28	-	(7,644,097,833)
ຫຼຸດລົງ/(ເພີ່ມຂຶ້ນ) ຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		4,214,900,409	(2,305,150,971)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(6,278,228,554)**	**(18,048,883,704)**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ລາຍຈ່າຍໃນການຊື້ຊັບສິນບັດດິ່ງທີ່ ແລະ ຊັບສິນໄລຍະຍາວອື່ນໆ		(13,742,627,185)	(54,390,780,402)
ລ່ວນເພີ່ມຈາກການຂາຍຊັບສິນບັດດິ່ງທີ		-	-
ເງິນກູ້ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ		(23,783,093,784)	(19,156,346,972)
ເກັບຄືນເງິນກູ້ທີ່ປ່ອຍໃຫ້ພາກສ່ວນທີ່ກ່ຽວຂ້ອງ		23,783,093,784	23,783,093,784
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**(13,742,627,185)**	**(49,764,033,590)**

ສະກຸນເງິນ: ກີບ

	ເອກະສານ ຊ້ອນທ້າຍ	*ສຳລັບໄລຍະ 3 ເດືອນ ວັນທີ 30 ມີນາ 2016*	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ກະແສເງິນສົດຈາກກິດຈະກຳການເງິນ			
ຮັບຈາກການກູ້ຢືມ		375,776,491,213	375,776,491,212
ຈ່າຍຄືນເງິນກູ້ຢືມ		(370,866,701,977)	(339,503,503,965)
ຈ່າຍໜີ້ສິນການເຊົ່າທາງການເງິນ		-	(5,840,775,389)
ເງິນປັນຜົນທີ່ໄດ້ຈ່າຍ		-	26,085,000,000)
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການເງິນ		**4,909,789,235**	**181,486,919,942**
ເພີ່ມຂຶ້ນສຸດທິຂອງເງິນສົດ		**(15,111,066,504)**	**128,699,196,419**
ເງິນສົດໃນຕົ້ນໄລຍະ		**74,657,189,719**	**9,423,698,736**
ເງິນສົດໃນທ້າຍໄລຍະ	**4**	**59,546,123,214**	**138,122,895,155**

ທ່ານ ຈັນທະດອນ ເມກສະຫວັນ
ຜູ້ອຳນວຍການຝ່າຍການເງິນ

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫຍ່ບໍລິສັດ

10 ພຶດສະພາ 2016

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ

ປົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ສໍາລັບ 3 ເດືອນຕົ້ນປີ
ນະວັນທີ ແລະ ສໍາລັບໄລຍະ 3 ເດືອນ ສິ້ນສຸດ ວັນທີ 31 ມີນາ 2016

1. ຂໍ້ມູນບໍລິສັດ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (ຕໍ່ໄປນີ້ເອີ້ນວ່າ "ບໍລິສັດ"), ຊື່ໃນເມື່ອກ່ອນແມ່ນບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ຈໍາກັດ, ແມ່ນບໍລິສັດທີ່ດໍາເນີນທຸລະກິດພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 0458, ອອກໃຫ້ໂດຍ ຫ້ອງການທະບຽນວິສາຫະກິດ, ກົມການຄ້າພາຍໃນ, ກະຊວງອຸດສາຫະກໍາ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008 ແລະ ຕໍ່ມາໄດ້ປັບປຸງ ແລະ ອອກໃບທະບຽນໃໝ່ ເລກທີ 508 ລົງວັນທີ 5 ທັນວາ 2014 ອອກໃຫ້ໂດຍຫ້ອງການທະບຽນວິສາຫະກິດ, ພະແນກຄຸ້ມຄອງທະບຽນວິສາຫະກິດ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

ອີງຕາມໃບທະບຽນວິສາຫະກິດສະບັບປັບປຸງໃໝ່ ເລກທີ 508 ລົງວັນທີ 05 ທັນວາ 2014 ຂອງພະແນກຄຸ້ມຄອງທະບຽນວິສາຫະກິດຂອງກະຊວງອຸດສາຫະກໍາແລະການຄ້າ ແລະ ໃບອະນຸຍາດເລກທີ 005 ລົງວັນທີ 26 ພະຈິກ 2014 ຂອງຄະນະກໍາມະການຄຸ້ມຄອງຫຼັກຊັບລາວ, ບໍລິສັດໄດ້ຮັບການອະນຸມັດໃຫ້ເພີ່ມຮຸ້ນຈາກ 350 ຕື້ກີບ ມາເປັນ 470 ຕື້ກີບ ແລະ ຈົດທະບຽນຮຸ້ນສາມັນທັງໝົດເຂົ້າໃນຕະຫຼາດຫຼັກຊັບລາວ.

ສໍານັກງານຂອງບໍລິສັດຕັ້ງຢູ່ ຖະໜົນກໍາແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ໃນປັດຈຸບັນ ບໍລິສັດມີສາງເກັບນໍ້າມັນ 5 ແຫ່ງ ເຊິ່ງຕັ້ງຢູ່ ນະຄອນຫຼວງວຽງຈັນ, ແຂວງ ບໍລິຄໍາໄຊ, ແຂວງ ສະຫວັນນະເຂດ, ແຂວງ ໄຊຍະບຸລີ ແລະ ແຂວງ ປາກເຊ, ສປປ ລາວ.

ກິດຈະກໍາຫຼັກຂອງບໍລິສັດແມ່ນ ຂາຍ ແລະ ເປັນຜູ້ສະໜອງນໍ້າມັນເຊື້ອໄຟ ແລະ ນໍ້າມັນເຄື່ອງໃຫ້ແກ່ຕະຫຼາດພາຍໃນປະເທດ.

2. ພື້ນຖານການກະກຽມບົດລາຍງານ

ເອກະສານລາຍງານການເງິນສໍາລັບ 3 ເດືອນຕົ້ນປີຂອງບໍລິສັດ ແມ່ນໄດ້ຖືກກະກຽມ ໂດຍນໍາໃຊ້ຫຼັກການຕົ້ນທຶນເດີມ ເອກະສານລາຍງານການເງິນສະບັບນີ້ແມ່ນໄດ້ຖືກລາຍງານເປັນສະກຸນເງິນກີບລາວ ("ກີບ").

ເອກະສານລາຍງານການເງິນສໍາລັບ 3 ເດືອນຕົ້ນປີຂອງບໍລິສັດ ແມ່ນຖືກກະກຽມໂດຍສອດຄ່ອງຕາມລະບຽບການບັນຊີເຊິ່ງໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ເລກທີ 3 ແລະ ບໍ່ໄດ້ມີວັດຖຸປະສົງໃນການນໍາສະເໜີຖານະການເງິນ, ຜົນຂອງການດໍາເນີນງານ ແລະ ກະແສເງິນສົດຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ເອກະສານລາຍງານການເງິນທີ່ຄັດມາກັບເອກະສານຊ້ອນທ້າຍນີ້, ລວມທັ້ງຈຸດປະສົງໃນການນໍາໃຊ້ຂອງເອກະສານລາຍງານດັ່ງກ່າວ ແມ່ນບໍ່ໄດ້ຖືກສ້າງຂຶ້ນສໍາລັບຜູ້ທີ່ບໍ່ໄດ້ຮັບຮູ້ກ່ຽວກັບນະໂຍບາຍບັນຊີຂອງບໍລິສັດທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ ເລກທີ 3.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດໃນ ວັນທີ 31 ທັນວາ.

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ສຳລັບ 3 ເດືອນຕົ້ນປີ (ຕໍ່)
ນະວັນທີ ແລະ ສຳລັບໄລຍະ 3 ເດືອນ ສິ້ນສຸດ ວັນທີ 31 ມີນາ 2016

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນກໍາມື ແລະ ເງິນຝາກທະນາຄານ

ໜີ້ຕ້ອງຮັບ

ໜີ້ຕ້ອງຮັບຖືກສະແດງໃນເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີຕາມມູນຄ່າຕາມບັນຊີໜີ້ຕ້ອງຮັບຈາກລູກຄ້າ ແລະ ລູກໜີ້ອື່ນໆ, ຫຼັງຈາກຫັກຄັງແຮສຳລັບໜີ້ທວງຍາກ. ການຕາດຕະເນໜີ້ທວງຍາກແມ່ນເກີດຂຶ້ນເມື່ອລູກຄ້າບໍ່ມາຊຳລະເງິນຕາມຂໍ້ກຳນົດໃນສັນຍາ. ໜີ້ເສຍຈະຖືກລ້າງອອກຈາກບັນຊີ. ມູນຄ່າຄ່າເສື່ອມໜີ້ທວງຍາກ ແລະ ໜີ້ເສຍ ແມ່ນໄດ້ບັນທຶກເຂົ້າໃນຈ່າຍອື່ນໆໃນການດຳເນີນງານທີ່ສະແດງຢູ່ໃນໃບລາຍງານຜົນໄດ້ຮັບສຳລັບ 3 ເດືອນຕົ້ນປີ.

ລາຍລະອຽດນະໂຍບາຍການຫັກຄັງແຮສຳລັບໜີ້ທວງຍາກມີດັ່ງນີ:

ໄລຍະເວລາຂອງໜີ້ຕ້ອງຮັບ	*ອັດຕາການຫັກຄັງແຮ (%)*
ລະຫວ່າງ 6 ເດືອນ ຫາ 1 ປີ	30
ລະຫວ່າງ 1 ຫາ 2 ປີ	50
2 ປີ ຂຶ້ນໄປ	100

ລາຍຈ່າຍລ່ວງໜ້າ

ລາຍຈ່າຍລ່ວງໜ້າຖືກຮັບຮູ້ເມື່ອມີການຈ່າຍເກີດຂຶ້ນ. ລາຍຈ່າຍເງິນລ່ວງໜ້າແມ່ນຖືກຫັກຕາມໄລຍະເວລາຂອງມູນຄ່າທີ່ໄດ້ຈ່າຍ ຫຼື ຕາມໄລຍະເວລາທີ່ມີຜົນປະໂຫຍດທາງເສດຖະກິດທີ່ກ່ຽວຂ້ອງກັບລາຍຈ່າຍດັ່ງກ່າວ.

ເຄື່ອງໃຊ້ໃນສາງ

ເຄື່ອງໃຊ້ໃນສາງຖືກສະແດງຕາມມູນຄ່າທີ່ຕ່ຳກ່ວາລະຫວ່າງມູນຄ່າທີ່ເກີດຂຶ້ນເພື່ອເອົາເຄື່ອງໃຊ້ໃນສາງມາຢູ່ໃນສະຖານທີ່ໃນປັດຈຸບັນ ແລະ ຢູ່ໃນສະພາບທີ່ໃຊ້ງານໄດ້ ກັບ ມູນຄ່າສຸດທິ ທີ່ສາມາດຮັບຮູ້ໄດ້.

ມູນຄ່າສຸດທິທີ່ສາມາດຮັບຮູ້ໄດ້ ແມ່ນລາຄາທີ່ຄາດວ່າຈະຂາຍ ຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບ ຄ່າໃຊ້ຈ່າຍທີ່ຈະເຮັດໃຫ້ສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ວິທີການບັນຊີກ່ຽວກັບເຄື່ອງໃຊ້ໃນສາງແມ່ນອີງຕາມຕົ້ນທຶນລາຄາຂາຍໂດຍໃຊ້ຫຼັກການເຄື່ອງໃຊ້ໃນສາງແບບເຂົ້າກ່ອນ-ອອກກ່ອນ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

ເຄື່ອງໃນສາງ (ຕໍ່)

ຄ່າເຜື່ອສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ຄ່າເຜື່ອສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ການຫຼຸດລົງ, ຄວາມເສຍຫາຍ, ຄວາມລ້າສະໄໝ, ແລະ ອື່ນໆ) ຂອງເຄື່ອງໃນສາງຂອງບໍລິສັດ ໂດຍປະເມີນຕາມຫລັກຖານການເສື່ອມຄ່າທີ່ມີຢູ່ນະມື້ອອກບົດລາຍງານສະບັບນີ້.

ການເພີ່ມຂຶ້ນ ແລະ ຫລຸດລົງຂອງຍອດເຫຼືອຄ່າເຜື່ອແມ່ນບັນທຶກເຂົ້າໃນຕົ້ນທຶນຂອງບັນຊີຕົ້ນທຶນໃນການຂາຍສິນຄ້າ ແລະ ບໍລິການພາຍໃຕ້ໃບລາຍງານຜົນໄດ້ຮັບ.

ຊັບສິນບັດຄົງທີ່ມີຕົວຕົນ

ຊັບສິນບັດຄົງທີ່ມີຕົວຕົນແມ່ນບັນທຶກຕາມມູນຄ່າຕົ້ນທຶນ ລົບ ໃຫ້ຄ່າຫຼ້ຽຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ມີຕົວຕົນແມ່ນປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນບັດພ້ອມໃຊ້ງານ. ລາຍຈ່າຍເພີ່ມເຕີມ, ການປັບປຸງ ແລະ ການຕໍ່ເຕີມແມ່ນຈົດເຂົ້າໃນມູນຄ່າຕົ້ນທຶນ ໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນຈົດເຂົ້າໃນໃບລາຍງານຜົນໄດ້ຮັບສຳລັບ 3 ເດືອນຕົ້ນປີ. ເມື່ອຊັບສິນບັດຄົງທີ່ໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼ້ຽຫ້ຽນສະສົມແມ່ນຈະຖືກຕັດອອກຈາກ ໃນສະຫຼຸບຊັບສິນບັດສຳລັບ 3 ເດືອນຕົ້ນປີ ແລະ ທຸກກຳໄລ ຫຼື ຂາດທຶນຈາກການສະສາງອອກນັ້ນ ແມ່ນຈະລວມຢູ່ໃນໃບລາຍງານຜົນໄດ້ຮັບສຳລັບ 3 ເດືອນຕົ້ນປີ.

ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງບໍ່ທີ່ມີຕົວຕົນແມ່ນບັນທຶກຕາມມູນຄ່າຕົ້ນທຶນ ລົບໃຫ້ຄ່າເສື່ອມສະສົມ.

ຕົ້ນທຶນຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນແມ່ນປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນບັດພ້ອມໃຊ້ງານ. ລາຍຈ່າຍເພີ່ມເຕີມ, ການປັບປຸງ ແລະ ການຕໍ່ເຕີມແມ່ນຈົດເຂົ້າໃນມູນຄ່າຕົ້ນທຶນ ໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນຈົດເຂົ້າໃນໃບລາຍງານຜົນໄດ້ຮັບສຳລັບ 3 ເດືອນຕົ້ນປີ. ເມື່ອຊັບສິນບັດຄົງທີ່ໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າເສື່ອມສະສົມແມ່ນຈະຖືກຕັດອອກຈາກ ໃນສະຫຼຸບຊັບສິນບັດສຳລັບ 3 ເດືອນຕົ້ນປີ ແລະ ທຸກກຳໄລ ຫຼື ຂາດທຶນຈາກການສະສາງອອກນັ້ນ ແມ່ນຈະລວມຢູ່ໃນໃບລາຍງານຜົນໄດ້ຮັບສຳລັບ 3 ເດືອນຕົ້ນປີ.

ສິດໃນການນຳໃຊ້ທີ່ດິນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນແມ່ນບັນທຶກອີງຕາມຕົ້ນທຶນໃນການເຂົ້າຄອບຄອງຊັບສິນດັ່ງກ່າວ ແລະ ນັບຈາກວັນທີຂອງການໂອນຊື່ທາງກົດໝາຍໃນໃບຕາດິນ. ສິດນຳໃຊ້ທີ່ດິນທີ່ບໍ່ໄດ້ກຳນົດໄລຍະເວລາການນຳໃຊ້ຈະບໍ່ຖືກຫັກຄ່າເສື່ອມ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

ຊັບສິນເຊົ່າ

ການກຳນົດວ່າສັນຍາໃດໜຶ່ງເປັນ (ຫຼື ມີສ່ວນເປັນ) ການເຊົ່າແມ່ນຈະຂຶ້ນກັບຄວາມໝາຍທີ່ແທ້ຈິງຂອງສັນຍານະມື້ທີ່ເຂົ້າຮ່ວມເປັນຄູ່ສັນຍາ ແລະ ກຳນົດໃຫ້ຕ້ອງມີການປະເມີນວ່າການປະຕິບັດພັນທະໃນສັນຍາແມ່ນຂຶ້ນກັບການນຳໃຊ້ຊັບສິນສະເພາະເຈາະຈົງໃດໜຶ່ງ ແລະ ສັນຍານັ້ນໂອນສິດໃນການນຳໃຊ້ຊັບສິນ.

ການເຊົ່າແມ່ນຈັດປະເພດເປັນການເຊົ່າທາງການເງິນເມື່ອເງື່ອນໄຂຕ່າງໆທາງການເຊົ່າຖືກໂອນລວມທັງຄວາມສ່ຽງ ແລະ ຜົນຕອບແທນຂອງຊັບສິນຖືກໂອນໄປໃຫ້ຜູ້ເຊົ່າ, ສ່ວນນອກເໜືອຈາກການເຊົ່າທາງການເງິນແມ່ນຈັດເປັນປະເພດການເຊົ່າເພື່ອການດຳເນີນງານ.

ຊັບສິນການເຊົ່າທາງການເງິນແມ່ນຖືກຮັບຮູ້ເຂົ້າເປັນທຶນ ແລະ ຫັກຄ່າຫຼ້ຽຫຽ້ນລົງໃນເອກະສານລາຍງານການເງິນສະບັບນີ້ ໂດຍການຮັບຮູ້ນະມື້ທຳອິດແມ່ນຮັບຮູ້ຕາມມູນຄ່າຍຸດຕິທຳ ຫຼື ຖ້າຕ່ຳກວ່າ ແມ່ນໃຫ້ຮັບຮູ້ຕາມມູນຄ່າປັດຈຸບັນສຸດທິຂອງມູນຄ່າຕ່ຳສຸດທີ່ຈ່າຍສັນຍາເຊົ່າ. ມູນຄ່າຕົ້ນທຶນທີ່ຖືກລວມເຂົ້າໃນມູນຄ່າທີ່ຕ້ອງຊຳລະສັນຍາເຊົ່າທາງການເງິນໃນອະນາຄົດແມ່ນຖືກບັນທຶກເປັນໜີ້ສິນ. ມູນຄ່າດອກເບ້ຍທີ່ຖືກລວມເຂົ້າໃນການເຊົ່າໃນທາງການເງິນ ແມ່ນຈະຖືກເອົາເຂົ້າໃນໃບລາຍງານຜົນໄດ້ຮັບໂດຍຕາມໃຫ້ໄລຍະການເຊົ່າຕາມອັດຕາຄົງທີ່ຂອງດອກເບ້ຍຂອງຍອດເຫຼືອຍັງເຫຼືອຂອງໜີ້ສິນການເຊົ່າທາງການເງິນ.

ການເຊົ່າທາງການເງິນຈະຖືກຫັກຄ່າຫຼ້ຽຫຽ້ນໂດຍນຳໃຊ້ວິທີຄິດໄລ່ຕາມແນວວິທີສະເໜີຕົວອີງຕາມອາຍຸການນຳໃຊ້ ແລະ ໄລຍະເວລາຂອງການເຊົ່າ, ຖ້າຫາກໝັ້ນໃຈວ່າບໍລິສັດຈະໄດ້ຮັບສິດໃນຄວາມເປັນເຈົ້າຂອງຊັບສິນເມື່ອສິ້ນສຸດໄລຍະເວລາຂອງການເຊົ່າ.

ການຫັກຄ່າຫຼ້ຽຫຽ້ນ ແລະ ຄ່າເສື່ອມມູນຄ່າ

ການຫັກຄ່າຫຼ້ຽຫຽ້ນຂອງຊັບສິນບັດຖຶງທີ່ມີຕົວຕົນ ແລະ ຊັບສິນບັດຖຶງທີ່ບໍ່ມີຕົວຕົນ ແມ່ນຄິດໄລ່ຕາມລຸ່ມການຄິດໄລ່ຄ່າຫຼ້ຽຫຽ້ນແບບສະເໜີຕົວຕາມອາຍຸທີ່ໄດ້ຄາດຄະເນໄວ້ດັ່ງນີ້:

ອາຄານ ແລະ ການປັບປຸງ	10 - 20 ປີ
ໂຮງງານ ແລະ ອຸປະກອນເຄື່ອງຈັກ	5 ປີ
ພາຫະນະ	5 - 10 ປີ
ເຟີນີເຈີ, ສິ່ງຕິດຕັ້ງ ແລະ ເຄື່ອງໃຊ້ຫ້ອງການ	5 ປີ
ຄອມພິວເຕີຊັອບແວ	5 ປີ
ສິດນຳໃຊ້ທີ່ດິນບໍ່ໄດ້ກຳນົດອາຍຸການນຳໃຊ້	ບໍ່ໄດ້ຫັກຄ່າຄ່າເສື່ອມ

ບໍ່ມີການຫັກຄ່າຫຼ້ຽຫຽ້ນສຳລັບຊັບສິນບັດກຳລັງຜະລິດຈົນກ່ວາສິ່ງກໍ່ສ້າງຕັ້ງກ່າວ ແລະ ສິ່ງຕິດຕັ້ງໄດ້ສຳເລັດເຊິ່ງໃນເວລານັ້ນຕົ້ນທຶນທັງໝົດຈະຖືກໂອນໄປເປັນຊັບສິນບັດຖຶງທີ່.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

ການລົງທຶນໃນຊັບສິນປັດຄົງທີ່

ການລົງທຶນໃນຊັບສິນປັດຄົງທີ່ແມ່ນຖືກລາຍງານຕາມມູນຄ່າຕົ້ນທຶນເຊິ່ງລວມທັງລາຍຈ່າຍທີ່ເກີດຈາກການຊື້-ຂາຍຊັບສິນ ລົບ ຄ່າຫຼຸ້ຍຫ້ຽນ ຫຼື ຄ່າເສື່ອມລະລົມ.
ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວຂ້ອງກັບຊັບສິນປັດມີໄວ້ເພື່ອການລົງທຶນໄດ້ບັນທຶກລົງໃນບັນຊີແລ້ວແມ່ນຈະຖືກບວກເພີ່ມໃສ່ມູນຄ່າສຸດທິຕາມບັນຊີຂອງຊັບສິນປັດມີໄວ້ເພື່ອການລົງທຶນເມື່ອມີຄວາມເປັນໄປໄດ້ວ່າຈະໄດ້ຮັບຜົນປະໂຫຍດທາງເສດຖະກິດໃນອະນາຄົດ, (ສ່ວນເພີ່ມຈາກການປະເມີນຕາມມາດຕະຖານດັ່ງເດີມຂອງຜົນການດຳເນີນງານຂອງການລົງທຶນໃນຊັບສິນປັດທີ່ມີຢູ່) ໃຫ້ເຂົ້າສູ່ບໍລິສັດ.
ການຫັກຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນປັດມີໄວ້ເພື່ອການລົງທຶນແມ່ນນຳໃຊ້ວິທີຄິດໄລ່ຕາມແບບວິທີສະເໝີຕົ້ວອີງຕາມອາຍຸນຳໃຊ້ຂອງຊັບສິນແຕ່ລະປະເພດຄື:

ອາຄານ	10 ປີ
ສິດນຳໃຊ້ທີ່ດິນທີ່ບໍ່ໄດ້ກຳນົດອາຍຸການນຳໃຊ້	ບໍ່ໄດ້ຫັກຄ່າເສື່ອມ

ຊັບສິນປັດມີໄວ້ເພື່ອການລົງທຶນຈະຖືກຢຸດຮັບຮູ້ຄືນຈາກບັນຊີເມື່ອຊັບສິນຖືກສະສາງອອກ ຫຼື ເມື່ອຊັບສິນປັດມີໄວ້ເພື່ອການລົງທຶນ ຖືກຢຸດນຳໃຊ້ ແລະ ເມື່ອເຫັນວ່າຊັບສິນດັ່ງກ່າວບໍ່ສາມາດນຳຜົນປະໂຫຍດມາໃຫ້ບໍລິສັດໃນອະນາຄົດໄດ້. ສ່ວນຕ່າງສຸດທິທີ່ເກີດຈາກການສະສາງ ແລະ ມູນຄ່າຕາມບັນຊີຂອງຊັບສິນແມ່ນບັນທຶກໃນໃບລາຍງານຜົນໄດ້ຮັບ ໃນປີທີ່ຊັບສິນດັ່ງກ່າວໝົດອາຍຸການນຳໃຊ້ ຫຼື ຖືກສະສາງອອກ.

ຊັບສິນປັດມີໄວ້ເພື່ອການລົງທຶນຖືກໂອນກໍ່ຕໍ່ເມື່ອມີການປ່ຽນແປງການນຳໃຊ້ໂດຍມີຫຼັກຖານຈາກຄວາມເປັນເຈົ້າຂອງໃນການເຂົ້າຄອບຄອງໄດ້ສິ້ນສຸດລົງ, ການເລີ່ມຕົ້ນຂອງການເຊົ່າໃນການດຳເນີນງານໃຫ້ກັບ ພາກສ່ວນອື່ນ ຫຼື ສິ້ນສຸດການກໍ່ສ້າງ ຫຼື ການປັບປຸງ. ເຖິງແມ່ນຊັບສິນປັດມີໄວ້ເພື່ອການລົງທຶນຈະຖືກໂອນຄວາມເປັນເຈົ້າຂອງ ແຕ່ກໍ່ບໍ່ສາມາດປ່ຽນແປງມູນຄ່າຕົ້ນທຶນ ຫຼື ມູນຄ່າຕາມບັນຊີຂອງຊັບສິນ ນະມື້ທີ່ມີການປ່ຽນແປງການນຳໃຊ້.

ຕົ້ນທຶນເງິນກູ້ຢືມ

ຕົ້ນທຶນເງິນກູ້ຢືມປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ທາງບໍລິສັດມີສ່ວນກ່ຽວພັນກັບການກູ້ຢືມເງິນ. ຕົ້ນທຶນເງິນກູ້ຢືມທີ່ເກີດຂຶ້ນພາຍໃນປີແມ່ນຖືກບັນທຶກເຂົ້າເປັນລາຍຈ່າຍ ເວັ້ນເສຍແຕ່ລາຍຈ່າຍທີ່ມີການເຄື່ອນໄຫວ ຄືດັ່ງທີ່ໄດ້ອະທິບາຍໃນວັກຂ້າງລຸ່ມນີ້:

ຕົ້ນທຶນເງິນກູ້ຢືມທີ່ມີຄຸນລັກສະນະກ່ຽວຂ້ອງໂດຍກົງກັບການຊື້ກໍ່ຕະຈະການ, ການກໍ່ສ້າງ, ຫຼື ການຜະລິດທີ່ເປັນຊັບສິນທີ່ມີຄວາມຈຳເປັນໃນການໃຊ້ເວລາຢ່າງຫຼວງຫຼາຍເພື່ອຄວາມພ້ອມສຳລັບຈຸດປະສົງການນຳໃຊ້ ຫຼື ການຂາຍ, ນີ້ເປັນສ່ວນໜຶ່ງຂອງຄ່າໃຊ້ຈ່າຍຂອງຊັບສິນທີ່ກ່ຽວຂ້ອງ.

ໜີ້ຕ້ອງສົ່ງ ແລະ ການຕັ້ງໜ້າຄ້າງຈ່າຍ

ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອານາຄົດສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບບິນເກັບເງິນຈະຖືກສົ່ງໃຫ້ກັບບໍລິສັດ ຫຼື ຍັງບໍ່ທັນສົ່ງກໍ່ຕາມ.

ກອງທຶນຕາມລະບຽບການສຳລັບຄວາມໝັ້ນຄົງຂອງລາຄານ້ຳມັນ

ບໍລິສັດມີພັນທະຕ້ອງຈ່າຍມູນຄ່າຄົງທີ່ຕໍ່ນ້ຳມັນ 1 ລິດ ທີ່ນຳເຂົ້າມາໃຫ້ລັດຖະບານເພື່ອປະກອບສ່ວນເຂົ້າກອງທຶນຕາມລະບຽບການສຳລັບຄວາມໝັ້ນຄົງຂອງລາຄານ້ຳມັນ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

ອາກອນ

ອາກອນມູນຄ່າເພີ່ມ

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນຄິດໄລ່ຈາກລາຍຮັບທີ່ເກີດຂຶ້ນຄຸບກັບອັດຕາອາກອນມູນຄ່າເພີ່ມທີ່ນຳໃຊ້ພາຍໃນໄລຍະ ຫຼັງຈາກທີ່ໄດ້ຫັກອາກອນມູນຄ່າເພີ່ມເບື້ອງຕົ້ນເຂົ້າທີ່ອານຸຍາດໃຫ້ຫັກໄດ້.

ອາກອນກຳໄລ

ອາກອນກຳໄລແມ່ນອາກອນທີ່ຄາດຄະເນຕ້ອງຈ່າຍເຊິ່ງມີພື້ນຖານການຄິດໄລ່ດັ່ງລຸ່ມນີ້:

- ກ່ອນປີ 2014: ການນຳໃຊ້ວິທີການຄິດໄລ່ອາກອນ, ເຊັ່ນ ອີງຕາມລະດັບຂອງນ້ຳມັນທີ່ຂາຍຄຸນໃຫ້ກັບຈຳນວນກຳໄລຕ້ອງຈ່າຍອາກອນຕໍ່ລິດຂອງນ້ຳມັນທີ່ໄດ້ຂາຍ. ທຸກການດັດແກ້ຕໍ່ໜີ້ຕ້ອງສົ່ງອາກອນກຳໄລຂອງໄລຍະທີ່ຜ່ານມາ; ແລະ
- ຕັ້ງແຕ່ປີ 2014: ກຳໄລຄາດຄະເນທີ່ຕ້ອງເສຍອາກອນພາຍໃນປີໂດຍນຳໃຊ້ອັດຕາອາກອນຕາມກົດໝາຍນະມື້ອອກເອກະສານລາຍງານສະບັບນີ້ ແລະ ທຸກການດັດແກ້ຕໍ່ໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ອາກອນລາຍໄດ້ຂອງພະນັກງານ

ອາກອນລາຍໄດ້ຂອງພະນັກງານ ແມ່ນໜີ້ຕ້ອງສົ່ງອາກອນຂອງເງິນເດືອນທີ່ຈ່າຍໃຫ້ພະນັກງານພາຍໄລຍະທີ່ຄິດໄລ່ຕາມອັດຕາອາກອນລາຍໄດ້ພະນັກງານທີ່ກຳນົດ ແລະ ນຳໃຊ້ພາຍໃນໄລຍະ.

ທຶນຈົດທະບຽນ

ທຶນຈົດທະບຽນຖືກຮັບຮູ້ຕາມມູນຄ່າທີ່ໄດ້ຈົດທະບຽນຂອງທະບຽນວິສາຫະກິດ.ທຶນຈົດທະບຽນລວມມີ ທຶນຈົດທະບຽນທີ່ຖອກແລ້ວ ແລະ ທຶນຈົດທະບຽນທີ່ຍັງບໍ່ທັນໄດ້ຖອກເຊິ່ງຖືກຮັບຮູ້ເປັນໜີ້ຕ້ອງຮັບອື່ນໆຈາກຂາຮຸ້ນນະວັນທີຂອງເອກະສານລາຍງານ.

ທຶນຈົດທະບຽນທີ່ເປັນສິດນຳໃຊ້ທີ່ດິນ ແລະ ຕົ້ນທຶນອາຄານແມ່ນອີງຕາມມູນຄ່າທີ່ໄດ້ຕົກລົງເຫັນດີລະຫວ່າງ ບໍລິສັດ ແລະ ຜູ້ຖືຮຸ້ນ ໃນບົດບັນທຶກການການປະກອບທຶນ.

ກຳໄລສະສົມແມ່ນຖືກປະກອບເປັນທຶນຈົດທະບຽນ ຕາມການອະນຸມັດຂອງຜູ້ຖືຮຸ້ນ.

ຄ້ຳແຮສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນແມ່ນຖືກຮັບຮູ້ຕາມຮຸ້ນທີ່ໄດ້ອອກເພີ່ມ, ເຊິ່ງເປັນສ່ວນເພີ່ມລະຫວ່າງລາຄາສະເໜີຊື້ຂອງຮຸ້ນທີ່ອອກເພີ່ມ ແລະ ລາຄາໜ້າບັດ, ພາຍຫຼັງການຫັກຄ່າໃຊ້ຈ່າຍການອອກຮຸ້ນ (ເຊັ່ນ ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ການຕີມູນຄ່າອື່ນໆ ທີ່ກ່ຽວຂ້ອງ, ຄ່າໃຊ້ຈ່າຍທີ່ປຶກສາ).

ອີງຕາມຄຳເຫັນຂອງບໜ້ງສືແນະນຳເລກທີ 056/ຄຄຊ, ອອກໂດຍຫ້ອງການສຳນັກງານຄຸ້ມຄອງຫຼັກຊັບ, ລົງວັນທີ 28 ເມສາ 2015 ໄດ້ອະນຸຍາດໃຫ້ບໍລິສັດສົ່ງເງິນສ່ວນເພີ່ມມູນຄ່າຮຸ້ນໃນສັດສ່ວນ 75 % (ທີ່ໄດ້ຈາກການອອກຈຳໜ່າຍຮຸ້ນຄັ້ງທຳອິດໃຫ້ແກ່ມວນຊົນ) ໃຫ້ກັບຜູ້ຖືຮຸ້ນເດີມຂອງບໍລິສັດ, ຫຼັງຈາກຫັກລາຍຈ່າຍທີ່ກ່ຽວຂ້ອງກັບການອອກຮຸ້ນແລ້ວ.

ການແບ່ງປັນກຳໄລສຸດທິ

ກຳໄລສຸດທິຫຼັງຫັກອາກອນແມ່ນຈະຖືກແບ່ງປັນໃຫ້ກັບຜູ້ຖືຮຸ້ນຫຼັງຈາກການອະນຸມັດໂດຍຜູ້ຖືຮຸ້ນໃນກອງປະຊຸມຜູ້ຖືຮຸ້ນປະຈຳປີ ແລະ ຫຼັງຈາກການແບ່ງສ່ວນຫັກເຂົ້າຄັງສຳຮອງຕ່າງໆ ອີງຕາມກົດລະບຽບຂອງບໍລິສັດ ແລະ ຕາມຂໍ້ກຳນົດໃນລະບຽບການຂອງລາວ.

3. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

ລາຍການເຄື່ອນໄຫວເປັນເງິນຕາຕ່າງປະເທດ

ເອກະສານລາຍງານການເງິນສຳລັບ 3 ເດືອນຕົ້ນປີແມ່ນ ສະແດງເປັນເງິນກີບລາວ "ກີບ", ເຊິ່ງແມ່ນສະກຸນເງິນຫລັກທີ່ບໍລິສັດ ນຳໃຊ້ໃນການດຳເນີນທຸລະກິດ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆແມ່ນຈະຖືກບັນທຶກໃນເບື້ອງຕົ້ນມູນຄ່າ ຕາມອັດຕາແລກປ່ຽນໃນມື້ທີ່ເກີດຂຶ້ນ. ບັນດາຊັບສິນ ແລະ ໜີ້ສິນທີ່ເປັນສະກຸນເງິນອື່ນໆ ນອກຈາກສະກຸນເງິນກີບລາວ ຈະ ຖືກປ່ຽນເປັນເງິນກີບລາວໂດຍນຳໃຊ້ອັດຕາແລກປ່ຽນ ໃນມື້ເຮັດໃຫ້ສະຫຼຸບຊັບສິນບັດສຳລັບ 3 ເດືອນຕົ້ນປີ. ທຸລະກຳໄລ ແລະ ຂາດທຶນຈະຖືກບັນທຶກເຂົ້າໃນໃບລາຍງານລາຍຮັບສຳລັບ 3 ເດືອນຕົ້ນປີ.

ບັນດາລາຍການທີ່ບໍ່ແມ່ນເງິນຕາ ທີ່ຖືກວັດແທກຕາມມູນຄ່າເດີມຂອງເງິນຕາຕ່າງປະເທດຈະຖືກປ່ຽນເປັນເງິນກີບລາວ ໂດຍ ໃຊ້ອັດຕາແລກປ່ຽນໃນມື້ທີ່ມີລາຍການເຄື່ອນໄຫວ.

ການຮັບຮູ້ລາຍຮັບ

ລາຍຮັບຈະຖືກຮັບຮູ້ ເມື່ອຄວາມເປັນໄປໄດ້ວ່າຈະໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ ແລະ ລາຍຮັບ ຕ້ອງສາມາດ ເຊື່ອຖືໄດ້. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸດຕິທຳທີ່ພິຈາລະນາຈາກທີ່ໄດ້ຮັບແລ້ວ ຫຼື ທີ່ສາມາດຮັບ. ການຮັບຮູ້ລາຍ ຮັບສະເພາະຄວນສອດຄ່ອງກັບຕາມການຮັບຮູ້ລາຍຮັບສະເພາະເຈາະຈົງຕໍ່ໄປນີ້:

ລາຍຮັບຈາກການຂາຍນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງ

ລາຍຮັບຈາກການຂາຍນ້ຳມັນເຊື້ອໄຟ ແລະ ນ້ຳມັນເຄື່ອງຖືກຮັບຮູ້ເມື່ອຄວາມສ່ຽງ ແລະ ຜົນຕອບແທນໃນຄວາມເປັນເຈົ້າ ຂອງສິນຄ້າໄດ້ຖືກໂອນໄປໃຫ້ຜູ້ຊື້. ໂດຍທົ່ວໄປແລ້ວແມ່ນຮັບຮູ້ເມື່ອສິນຄ້າຖືກສົ່ງໄປເຖິງມືລູກຄ້າຮຽບຮ້ອຍແລ້ວ.

ດອກເບ້ຍ

ລາຍຮັບຖືກຮັບຮູ້ຕາມຫຼັກການຕັ້ງໜີ້ຄ້າງຮັບຄ້າງຈ່າຍ ໂດຍໃຊ້ວິທີອັດຕາດອກເບ້ຍຕົວຈິງທີ່, ຍົກເວັ້ນເມື່ອມີຂໍ້ສົງໄສວ່າຈະບໍ່ ສາມາດເກັບໜີ້ໄດ້.

ລາຍຮັບຄ່າເຊົ່າ

ລາຍຮັບຄ່າເຊົ່າເກີດຂຶ້ນຈາກສັນຍາເຊົ່າເພື່ອການດຳເນີນງານທີ່ໃຊ້ວິທີຄິດໄລ່ຕາມແບບວິທີສະເໜີຕົວອີງຕາມໄລຍະຂອງການ ເຊົ່າ.

4. ເງິນສົດ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ເງິນສົດໃນຄັງ	59,954,100	51,530,000
ເງິນສົດກຳລັງເຄື່ອນຍ້າຍ (*)	59,486,169,115	74,557,339,108
ເງິນຝາກທະນາຄານ (*)	-	48,320,611
	59,546,123,215	**74,657,189,719**

(*) ເງິນສົດກຳລັງເຄື່ອນຍ້າຍແມ່ນສະແດງເຖິງເງິນສົດໃນລະຫວ່າງທາງລະຫວ່າງຕ່າງທະນາຄານໃນວັນທີ່ຍອກເອກະສານ ລາຍງານການເງິນ

(**) ຍອດເງິນໃນທະນາຄານພັດທະນາລາວຈຳນວນ 4,157,625,120 ກີບ ແມ່ນຫຼັກຊັບຄ้ำປะกันสำหรับเงินกู้. ສຳລັບ ລາຍລະອຽດເບິ່ງປົດອະທິບາຍຊ້ອນທ້າຍເລກທີ 16 ແລະ 20.

5. ການລົງທຶນໄລຍະສັ້ນ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ໜີ້ຕ້ອງຮັບເງິນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນຂອງ ພາກສ່ວນທີ່ກ່ຽວຂ້ອງ	11,727,093,359	11,727,093,359
	11,727,093,359	**11,727,093,359**

ລາຍລະອຽດຂອງເງິນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນຈາກພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

ຜູ້ກູ້ຢືມ	*ສັນຍາລົງວັນທີ*	*ຍອດຫຼືອທ້າຍ (ກີບ)*	*ກຳນົດສັນຍາ*	*ອັດຕາດອກເບ້ຍ (%ຕໍ່ປີ)*
ບໍລິສັດ ສິດທິ ໄລຈິດສຕິກລາວ ຈຳກັດ	15 ມີນາ 2015	11,727,093,359	31 ທຸລາ 2016	6.5%
		11,727,093,359		

ນະມື້ອອກບົດລາຍງານ ທັງບໍລິສັດ ແລະ ບໍລິສັດໃນເຄືອຄາຍແມ່ນຍັງຢູ່ໃນຂັ້ນຕອນການຂະຫຍາຍໄລຍະເວລາການຊຳລະເງິນ ແລະ ມື້ຄົບກຳນົດ.

6. ໜີ້ຕ້ອງຮັບທາງການຄ້າ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ໜີ້ຕ້ອງຮັບການຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	33,267,728,833	33,267,728,833
ໜີ້ຕ້ອງຮັບການຄ້າ	74,876,840,688	68,089,664,083
ຫັກຄັ່ງແຄສຳລັບໜີ້ຫວຍຍາກ	(2,714,700,684)	(2,714,700,684)
	105,429,868,837	**98,642,692,232**

7. ໜີ້ຕ້ອງຮັບອື່ນໆ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ	40,100,022,946	40,194,690,016
ໜີ້ຕ້ອງຮັບອື່ນໆ	5,128,960,956	-
	45,228,983,902	**40,194,690,016**

8. ເຄື່ອງໃບລາງ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ນ້ຳມັນເຊື້ອໄຟ	9,961,564,740	9,975,652,919
ນ້ຳມັນເຄື່ອງ	1,358,744,544	1,341,996,758
	11,320,309,284	**11,317,649,677**

9. ຊັບສິນໝຸນວຽນອື່ນໆ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ເງິນລ່ວງໜ້າໃຫ້ຜູ້ສະໜອງ	19,799,083,772	11,056,165,621
ລາຍຈ່າຍລ່ວງໜ້າທີ່ກ່ຽວຂ້ອງກັບການດຳເນີນງານ	3,987,701,987	1,235,264,594
ເງິນລ່ວງໜ້າໃຫ້ພະນັກງານ	2,971,070,208	1,548,708,470
ເງິນລ່ວງໜ້າຄ່າທຳນຽມປະຈຳປີຂອງທະນາຄານ	638,896,191	1,138,183,440
ລາຍຈ່າຍລ່ວງໜ້າໃຫ້ບັນດາລູກຄ້ຳເພື່ອນຳໃຊ້ບັດ		
ສະມາດກາດ	990,000,000	990,000,000
ໜີ້ຕ້ອງຮັບອາກອນຊຶມໃຊ້ທີ່ຈ່າຍເກີນ	966,600,000	966,600,000
ອຸປະກອນສະມາດກາດ	419,845,679	419,845,678
ອື່ນໆ	3,520,970,765	3,789,418,535
	33,294,168,602	**21,144,186,338**

10. ຊັບສິນບັດຄົງທີ່ມີຕົວຕົນ

ສະກຸນເງິນ: ກີບ

	ອາຄານ ແລະ ໂຄງສ້າງ	*ອຸປະກອນ ແລະ ເຄື່ອງຈັກ*	*ພາຫະນະ*	*ເຄື່ອງໃຊ້ຫ້ອງການ*	*ລວມ*
ຕົ້ນທຶນ					
ຍອດເຫຼືອນະວັນທີ 1 ມັງກອນ 2016	99,041,806,835	38,937,157,923	9,842,579,977	15,889,601,747	163,711,146,482
- ຮັບເຂົ້າໃໝ່	-	1,026,663,900	22,800,000	400,302,158	1,449,766,058
- ເງິນຈາກຊັບສິນບັດຄົງທີ່ພວມກໍ່ສ້າງ	2,429,445,080	-	-	-	2,429,445,080
- ສະສາງອອກ	-	-	-	-	-
ມູນຄ່ານະວັນທີ 31 ມີນາ 2016	101,471,251,915	39,963,821,823	9,865,379,977	16,289,903,905	167,590,357,620
ຄ່າຫຼ້ຍຫ້ຽນສະສົມ					
ຍອດເຫຼືອມູນຄ່ານະວັນທີ 1 ມັງກອນ 2016	19,666,151,802	18,222,070,559	5,858,340,328	6,504,638,679	50,251,201,368
- ຄ່າຫຼ້ຍຫ້ຽນໃນໄລຍະ	1,507,782,217	1,107,572,155	391,474,985	626,328,106	3,633,157,463
- ສະສາງອອກ	-	-	-	-	-
ຍອດເຫຼືອນະວັນທີ 31 ມີນາ 2016	21,173,934,019	19,329,642,714	6,249,815,313	7,130,966,785	53,884,358,831
ມູນຄ່າສຸດທິ					
ຍອດເຫຼືອນະວັນທີ 1 ມັງກອນ 2016	79,375,655,033	20,715,087,364	3,984,239,649	9,384,963,068	113,459,945,114
ຍອດເຫຼືອນະວັນທີ 1 ມັງກອນ 2016	80,297,317,896	20,634,179,109	3,615,564,664	9,158,937,120	113,705,998,789

ຊັບສິນບັດຄົງທີ່ມີຕົວຕົນບາງລາຍການແມ່ນຖືກໃຊ້ເປັນຫຼັກຊັບຄ້ຳປະກັນໃຫ້ແກ່ເງິນກູ້ຍືມຂອງບໍລິສັດ. ສຳລັບລາຍລະອຽດກະລຸນາເບິ່ງໃນບົດອະທິບາຍເລກທີ 16 ແລະ 20

11. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ສະກຸນເງິນ: ກີບ

	ກ່ອນການກວດສອບ ສິດນຳໃຊ້ທີ່ດິນບໍ່ໄດ້ກຳນົດ ອາຍຸການນຳໃຊ້	ກ່ອນການກວດສອບ ຄອມພິວເຕີຊ້ອຟແວ	ກ່ອນການກວດສອບ ລວມ
ຕົ້ນທຶນ:			
ຍອດເຫຼືອນະວັນທີ 1 ມັງກອນ 2016	123,892,263,841	8,995,006,300	132,887,270,141
ຍອດເຫຼືອນະວັນທີ 31 ມີນາ 2016	123,892,263,841	8,995,006,300	132,887,270,141
ຄ່າເສື່ອມສະສົມ:			
ຍອດເຫຼືອນະວັນທີ 1 ມັງກອນ 2015	-	226,163,071	226,163,071
ຄ່າເສື່ອມພາຍໃນປີ	-	228,774,144	228,774,144
ຍອດເຫຼືອນະວັນທີ 31 ມີນາ 2016	-	454,937,215	454,937,215
ມູນຄ່າສຸດທິສຸດທ້າຍຕາມບັນຊີ:			
ຍອດເຫຼືອນະວັນທີ 1 ມັງກອນ 2016	123,892,263,841	8,768,843,229	132,661,107,070
ຍອດເຫຼືອນະວັນທີ 31 ມີນາ 2016	123,892,263,841	8,540,069,085	132,432,332,926

ບາງສິດນຳໃຊ້ທີ່ດິນໃນວຽງຈັນ, ສະຫວັນນະເຂດ, ຫຼວງພະບາງ, ແລະຈຳປາສັກແມ່ນຖືກໃຊ້ເປັນຫຼັກຊັບຄ້ຳປະກັນໃຫ້ແກ່ເງິນກູ້ຢືມຂອງບໍລິສັດ. ເບິ່ງບົດອະທິບາຍເລກທີ 16 ແລະ 20 ສຳລັບລາຍລະອຽດ.

12. ຊັບສິນບັດມີໄວ້ເພື່ອການລົງທຶນ

ສະກຸນເງິນ: ກີບ

	ສິດນຳໃຊ້ທີ່ດິນບໍ່ໄດ້ກຳນົດອາຍຸການນຳໃຊ້	ອາຄານ	ລວມ
ຕົ້ນທຶນ:			
ຍອດເຫຼືອນະວັນທີ 1 ມັງກອນ 2016	123,983,600,703	31,492,915,293	155,476,515,996
ເພີ່ມຂຶ້ນພາຍໃນປີ	868,976,000	4,549,022,338	5,417,998,338
ຍອດເຫຼືອນະວັນທີ 31 ມີນາ 2016	124,852,576,703	36,041,937,631	160,894,514,334
ຄ່າຫຼຸ້ຍຫ້ຽນສະສົມ:			
ຍອດເຫຼືອນະວັນທີ 1 ມັງກອນ 2016	-	2,900,539,582	2,900,539,582
ຄ່າເສື່ອມພາຍໃນປີ	-	516,439,356	516,439,356
ຍອດເຫຼືອນະວັນທີ 31 ມີນາ 2016	-	3,416,978,938	3,416,978,938
ມູນຄ່າສຸດທິສຸດທ້າຍຕາມບັນຊີ:			
ຍອດເຫຼືອນະວັນທີ 1 ມັງກອນ 2016	123,983,600,703	28,592,375,711	152,575,976,414
ຍອດເຫຼືອນະວັນທີ 31 ມີນາ 2016	124,852,576,703	32,624,958,693	157,477,535,396

ການລົງທຶນໃນຊັບສິນບັດຄົງທີ່ເຫຼົ່ານີ້ໝາຍເຖິງທີ່ດິນ, ຕຶກອາຄານ ແລະ ປ້ຳນ້ຳມັນໃນນະຄອນຫຼວງວຽງຈັນເຊິ່ງບໍລິສັດໄດ້ໃຫ້ ປ້ຳນ້ຳມັນໄໝທັນ (ພລັສ 1), ປ້ຳນ້ຳມັນພລັສໝອງແຫ້ວ (ພລັສ 2), ປ້ຳນ້ຳມັນພະຂາວ (ພລັສ 3), ປ້ຳນ້ຳມັນພະແດງ (ພລັສ 4), ປ້ຳນ້ຳມັນພລັສດອນກອຍ (ພລັສ 8), ບໍລິສັດ ສິດທິ ໂລຈິດສຕິກ ລາວ ຈຳກັດ, ບໍລິສັດ ລາວ ເດລິເກດ ຂາ ເຂົ້າ-ຂາອອກ ຈຳກັດ ແລະ ບໍລິສັດ ແອວເທັກ ລາວ ຈຳກັດ ເຊົ່າ ແລະ ທີ່ດິນຫຼາຍແຫ່ງອື່ນໆຢູ່ແຂວງສະຫວັນນະເຂດເຊິ່ງ ບໍລິສັດໄດ້ມີແຜນທີ່ຈະສ້າງປ້ຳນ້ຳມັນເພື່ອໃຫ້ເຊົ່າ.

ບາງສິດນຳໃຊ້ທີ່ດິນໃນ ສະຫວັນນະເຂດ, ແມ່ນຖືກໃຊ້ເປັນຫຼັກຊັບຄ້ຳປະກັນໃຫ້ແກ່ເງິນກູ້ຢືມຂອງບໍລິສັດ. ສຳລັບລາຍລະ ອຽດກະລຸນາເບິ່ງໃນບົດອະທິບາຍເລກທີ 16 ແລະ 20.

13. ການກໍ່ສ້າງພອມດຳເນີນ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ໂຄງການແນັກແຄນຍອນ ແລະ ໄຕລີມາດ	599,526,208	599,526,208
ລະບົບ ERP ໃໝ່	2,132,799,419	1,904,024,305
ປ້ຳນ້ຳມັນ ຫົວເມືອງ (ພວັສ 5)	5,351,390,424	3,317,451,711
ປ້ຳນ້ຳມັນສຳພັນບາ	-	2,644,792,612
ປ້ຳນ້ຳມັນຂີ້ຫຼວງ	4,679,715,773	3,493,013,333
ປ້ຳນ້ຳມັນເມືອງເງິນ	1,141,472,500	-
ສາງ ຢຸ່ເລີ້ນທາງ 450 ປີ	3,043,331,346	-
ອື່ນໆ	6,576,313,391	4,302,331,317
	23,524,549,061	**16,261,139,486**

14. ການລົງທຶນໄລຍະຍາວ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ໜີ້ຕ້ອງຮັບເງິນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນຂອງພາກສ່ວນອື່ນທີ່ກ່ຽວຂ້ອງ	16,749,572,212	16,749,572,212
	16,749,572,212	**16,749,572,212**

ລາຍລະອຽດຂອງເງິນກູ້ທີ່ບໍ່ມີຫຼັກຊັບຄ້ຳປະກັນຈາກພາກສ່ວນອື່ນທີ່ກ່ຽວຂ້ອງມີດັ່ງນີ້:

ຜູ້ກູ້ຢືມ	*ສັນຍາລົງວັນທີ*	*ຍອດຫຼືອທ້າຍ (ກີບ)*	*ກຳນົດສັນຍາ ແລະ ວັນຄົບກຳນົດ*	*ອັດຕາດອກເບ້ຍ (%ຕໍ່ປີ)*
ບໍລິສັດ ລາວເຕລີມາດ ຂາເຂົ້າ-ຂາອອກ ຈຳກັດ	1 ກຸມພາ 2012	16,749,572,212	60 ເດືອນ, ຄົບກຳນົດ ວັນທີ 1 ກຸມພາ 2017	10%-11%
		16,749,572,212		

15. ຊັບສິນບໍ່ໝຸນວຽນອື່ນໆ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ລ່ວງໜ້າຄ່າເຊົ່າດິນ	22,763,448,559	20,355,129,514
	22,763,448,559	**20,355,129,514**

16. ເງິນກູ້ ແລະ ການກູ້ຢືມໄລຍະສັ້ນ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ເງິນກູ້ໄລຍະສັ້ນຈາກທະນາຄານ	103,284,814,122	132,321,826,875
ສ່ວນໜີ້ສິນທີ່ເປັນໄລຍະສັ້ນ (ບົດອະທິບາຍເລກທີ 20)	15,960,000,000	2,328,292,499
	119,244,814,122	**134,650,119,374**

16. ເງິນກູ້ ແລະ ການກູ້ຢືມໄລຍະສັ້ນ (ຕໍ່)

ລາຍລະອຽດຂອງເງິນກູ້ໄລຍະສັ້ນຈາກທະນາຄານມີດັ່ງລຸ່ມນີ້:

ຜູ່ໃຫ້ກູ້	*ສັນຍາ*	*ຍອດຫຼືອທ້າຍ ທຽບເທົ່າກີບ*	*ສະກຸນເງິນເດີມ ສະກຸນ ເງິນ*		*ອັດຕາດອກ ເບ້ຍ(% ຕໍ່ປີ)*	*ຫຼັກຊັບຄ້ຳປະກັນ*
ທະນາຄານ ເອເອັນແຊດ ລາວ ຈຳກັດ	ເລກທີ 019/2015	15,087,113,623	1,862,863,760	ໂດລາ	1 ປີ, ມີຄົບກຳນົດ ແມ່ນວັນທີ 25 ພຶດສະພາ 2016	6,5%	ສິດນຳໃຊ້ທີ່ດິນນະຄອນຫຼວງວຽງຈັນ,ສະຫວັນນະເຂດ, ຫຼວງພະບາງ, ເນື້ອທີ່ລວມ ແມ່ນ 31,029 m^2
ທະນາຄານ ພັດທະນາ ລາວ	ເລກທີ 062/04/2015, ລົງ ວັນທີ 6 ເມສາ2015	29,980,000,000	29,980,000,000	ກີບ	1 ປີ, ມີຄົບກຳນົດ ແມ່ນວັນທີ 6 ເມສາ 2016	10.5%	ສິດນຳໃຊ້ທີ່ດິນ, ບ້ານ, ຕຶກ ແລະຖັງນ້ຳມັນໃນສະຫວັນນະເຂດ, ຈຳປາສັກ ແລະ ວຽງຈັນ ແລະຍອດໃນບັນຊີທະນາຄານ 2 ບັນຊີ (ບົດອະທິບາຍເລກທີ 4)
ທະນາຄານພົງສະຫວັນ (ບົດອະທິບາຍເລກທີ 30)	ເລກທີ 0385.15, ລົງວັນທີ 13 ຕຸລາ 2015	64,792,000,000	8,000,000	ໂດລາ	1 ປີ, ມີຄົບກຳນົດ ແມ່ນວັນທີ 20 ຕຸລາ 2016	8%	ສິດນຳໃຊ້ທີ່ດິນໃນນະຄອນຫຼວງວຽງຈັນ ເນື້ອທີ 22,244 m^2 ປາກເຊ ແຂວງຈຳປາສັກ ທີ່ອອກຊື່ທ່ານ ຈັນທອນສິດທິໄຊ ເນື້ອທີ 2,249 m^2.
		109,859,113,623					

17. ໜີ້ຕ້ອງຮັບທາງການຄ້າ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ໜີ້ຕ້ອງຮັບການຄ້າ	20,935,433,643	14,152,671,311
ໜີ້ຕ້ອງຮັບການຄ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ	3,568,309,338	2,748,564,846
	24,503,742,981	**16,901,236,157**

18. ໜີ້ຕ້ອງຈ່າຍອາກອນ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ອາກອນກຳໄລ (ບົດອະທິບາຍເລກທີ 28)	2,499,738,547	1,075,091,380
ອາກອນມູນຄ່າເພີ່ມ	1,026,905,714	724,053,738
ອາກອນລາຍໄດ້ພະນັກງານ	140,055,129	66,682,726
ອາກອນອື່ນໆ (*)	6,813,453,669	5,948,600,937
	10,480,153,059	**7,814,428,781**

(*) ອາກອນອື່ນໆແມ່ນຍອດເງິນໜີ້ຕ້ອງຈ່າຍ ໃບເສຍຄ່າທາງ, ອາກອນຊົມໃຊ້, ພາສີນຳເຂົ້າ ແລະ ຄ່າທຳນຽມກອງທຶນ ຕາມລະບຽບການສຳລັບຄວາມໝັ້ນຄົງຂອງລາຄານ້ຳມັນນະມ໊ອກເອກະສານລາຍງານການເງິນສະບັບນີ.

19. ໜີ້ຕ້ອງຈ່າຍອື່ນໆ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ດອກເບ້ຍຄ້າງຈ່າຍ	80,837,973	-
ໜີ້ຕ້ອງຈ່າຍໃຫ້ພະນັກງານ	902,849,908	-
ໜີ້ຕ້ອງຈ່າຍປະກັນສັງຄົມ	38,180,000	55,962,097
ໜີ້ຕ້ອງຈ່າຍອື່ນໆ	41,921,061	154,100,994
	1,063,788,942	**210,063,091**

20. ເງິນກູ້ ແລະ ການກູ້ຢືມໄລຍະຍາວ

ສະກຸນເງິນ: ກີບ

	31 ມີນາ 2016	*31 ທັນວາ 2015*
ເງິນກູ້ຢືມຈາກທະນາຄານ	70,295,489,735	71,960,000,000
	70,295,489,735	**71,960,000,000**
ໃນນີ້ມີ:		
ສັດສ່ວນໜີ້ສິນທີ່ເປັນໄລຍະສັ້ນ (ບົດອະທິບາຍເລກທີ 16)	*14,295,489,735*	*15,960,000,000*
ສັດສ່ວນທີ່ຍັງເປັນໄລຍະຍາວ	*56,000,000,000*	*56,000,000,000*

20. ເງິນກູ້ ແລະ ການກູ້ຢືມໄລຍະຍາວ (ຕໍ່)

ລາຍລະອຽດເງິນກູ້ ແລະ ການກູ້ຢືມໄລຍະຍາວນະວັນທີ 31 ມີນາ 2016 ມີດັ່ງນີ້:

ຜູ້ໃຫ້ກູ້	*ສັນຍາ*	*ຍອດຫຼືອທ້າຍ ກີບ*	*ໄລຍະເວລາກຳນົດ*	*ອັດຕາດອກເບ້ຍ (% ຕໍ່ປີ)*	*ຫຼັກຊັບຄ້ຳປະກັນ*
ທະນາຄານ ເອເຊັຍ ເວລ ລາວ ຈຳກັດ	ເລກທີ 019/2015	295,489,735	31 ພຶດສະພາ 2016	6.5%	ສິດນຳໃຊ້ທີ່ດິນນະຄອນຫຼວງວຽງຈັນ,ສະຫວັນນະເຂດ, ຫຼວງພະບາງ, ເນື້ອທີ່ລວມແມ່ນ 31,029 m^2
	ໃນນີ້ສັດສ່ວນປະຈຸບັນມີ	*295,489,735*			
ທະນາຄານ ພັດທະນາ ລາວ	ເລກທີ 063/04/2015, ລົງ ວັນທີ 6 ເມສາ 2015	70,000,000,000	ການຊຳລະຕົ້ນທຶນງວດທຳອິດແມ່ນວັນທີ 6 ເມສາ 2016 ແລະການຊຳລະງວດສຸດທ້າຍ ແມ່ນວັນທີ 6 ເມສາ 2020	10.5%	ສິດນຳໃຊ້ທີ່ດິນ,ບ້ານ,ຕຶກແລະຖັງນ້ຳມັນໃນສະຫວັນນະເຂດ, ຈຳປາສັກແລະວຽງຈັນແລະຍອດໃນບັນຊີທະນາຄານ 2 ບັນຊີ (ບົດອະທິບາຍເລກທີ 4)
	ໃນນີ້ສັດສ່ວນປະຈຸບັນມີ	*14,000,000,000*			
		70,295,489,735			

21. ທຶນເຈົ້າຂອງ

21.1 ຮຸ້ນ

	ຈຳນວນ
ຮຸ້ນທີ່ໄດ້ຮັບອະນຸຍາດ	**235,000,000**
ຮຸ້ນທີ່ອອກ ແລະ ຊຳລະແລ້ວ	
ຮຸ້ນສາມັນ	235,000,000
ຮຸ້ນບຸລິມະສິດ	-
ຮຸ້ນທີ່ສາມາດຊື້ຂາຍໄດ້	
ຮຸ້ນສາມັນ	235,000,000
ຮຸ້ນບຸລິມະສິດ	-

ຮຸ້ນຂອງບໍລິສັດ (ພາຍໃຕ້ຊື່ PTL) ທີ່ໄດ້ຮັບການຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວນັບຕັ້ງແຕ່ ວັນທີ 10 ທັນວາ 2014 ອີງຕາມໃບຈົດທະບຽນ ເລກທີ 005 ລົງໃນວັນທີ 26 ພະຈິກ 2014. ມູນຄ່າໜ້າບັດຂອງຮຸ້ນແມ່ນ 2,000 ກີບ.

22. ລາຍຮັບ

	ສະກຸນເງິນ: ກີບ	
	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ຂາຍນ້ຳມັນເຊື້ອໄຟ	199,350,261,171	177,392,495,148
ລາຍຮັບຈາກການບໍລິການໃຫ້ເຊົ່າ	649,038,338	-
ລາຍຮັບຈາກຄ່າບໍລິການບັດສະນາດການ	126,698,180	-
ຂາຍນ້ຳມັນເຕົ້ຍ	1,573,202,894	17,782,811,360
ລົບ: ສ່ວນຫຼຸດການຂາຍ	(3,280,040)	(414,099)
	201,695,920,543	**195,174,892,409**

23. ຕົ້ນທຶນຈາກການຂາຍ

	ສະກຸນເງິນ: ກີບ	
	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ຕົ້ນທຶນນ້ຳມັນເຊື້ອໄຟ	173,432,240,820	108,088,394,699
ຕົ້ນທຶນການບໍລິການໃຫ້ເຊົ່າ	516,439,356	-
ຕົ້ນທຶນຄ່າບໍລິການບັດສະນາດການ	24,282,182	-
ຕົ້ນທຶນນ້ຳມັນເຕົ້ຍ	495,604,815	57,648,617,303
	174,468,567,173	**165,737,012,002**

24. ລາຍຮັບອື່ນໆ

ສະກຸນເງິນ: ກີບ

	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ລາຍຮັບຈາກການຂາຍຊັບສິນບັດຄົງທີ	-	16,085,642,483
ອື່ນໆ	-	7,462,772
	-	**16,093,105,255**

25. ລາຍຈ່າຍອື່ນໆ

ສະກຸນເງິນ: ກີບ

	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ລາຍຈ່າຍອື່ນໆ	310,000	617,762
	310,000	**617,762**

26. ລາຍຮັບການເງິນ

ສະກຸນເງິນ: ກີບ

	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ລາຍຮັບດອກເບ້ຍຈາກເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ	635,481,617	1,012,441,872
ສ່ວນຫຼຸດການຊຳລະໄວຈາກຜູ້ສະໜອງ	346,497,763	242,190,805
ກຳໄລທີ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນ	722,285,490	125,365,177
ການດັດແກ້ອາກອນມູນຄ່າເພີ່ມ	-	1,074,612,023
ອື່ນໆ	250,403,559	-
	1,954,668,429	**2,454,609,877**

27. ລາຍຈ່າຍການເງິນ

ສະກຸນເງິນ: ກີບ

	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ລາຍຈ່າຍດອກເບ້ຍ	3,936,094,145	3,131,528,992
ຂາດທຶນທີ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນ	665,206,076	408,331,867
	4,601,300,221	**3,539,860,859**

28. ອາກອນກຳໄລ

ອັດຕາອາກອນກຳໄລ ("ອກລ")ຕາມກົດໝາຍທີ່ບໍລິສັດນຳໃຊ້

ພາຍໃຕ້ກົດໝາຍວ່າດ້ວຍສ່ວຍສາອາກອນສະບັບປັບປຸງໃໝ່ເລກທີ 05/ສພຊລົງວັນທີ 20 ທັນວາ 2011, ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 01 ມັງກອນ 2013 ບໍລິສັດຕ້ອງເສຍອາກອນກຳໄລ ("ອກລ") ໃນອັດຕາ 24% ຂອງກຳໄລທີ່ຖືກເສຍອາກອນທີ່ໄດ້ບັນທຶກຍັບຊີຕາມລະບົບບັນຊີລາວ. ນອກຈາກນີ້,ໃນຖານະເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ, ບໍລິສັດໄດ້ຮັບສ່ວນຫຼຸດພິເສດ 5% ຈາກອັດຕາປົກກະຕິຂອງ ("ອກລ") ເປັນເວລາ 4 ປີນັບຈາກມື້ທີ່ຈົດທະບຽນຕາມກົດໝາຍວ່າດ້ວຍຫຼັກຊັບທີ່ອອກໂດຍສະພາແຫ່ງຊາດຂອງສປປລາວ, ຈຶ່ງເປັນຜົນເຮັດໃຫ້ອັດຕາ ("ອກລ") ບັງຄັບຕາມກົດໝາຍຂອງບໍລິສັດໃນໄລຍະນີ້ແມ່ນ 19% ຂອງກຳໄລທີ່ຕ້ອງເສຍອາກອນ.

ວິທີການກຳນົດອາກອນໄລທີ່ນຳໃຊ້ໂດຍບໍລິສັດກ່ອນປີ 2014

ກ່ອນປີ 2014, ບໍລິສັດໄດ້ກຳນົດພັນທະອາກອນກຳໄລໂດຍນຳໃຊ້ວິທີການຄິດໄລ່ອາກອນກຳໄລແບບມອບໝາ ຕົວຢ່າງ: ອີງຕາມປະລິມານນ້ຳມັນທີ່ຂາຍ ຄູນໃຫ້ມູນຄ່າອາກອນກຳໄລແບບບັງຄັບຕໍ່ປະລິມານນ້ຳມັນລິດທີ່ໄດ້ຂາຍ. ການເຈ້ຍເສຍອາກອນກຳໄລທີ່ຖືກກະກຽມພາຍໃຕ້ວິທີການຄິດໄລ່ອາກອນກຳໄລແບບມອບໝາແມ່ນໄດ້ຮັບການໄລ່ລຽງແລະຍອມຮັບໂດຍເຈົ້າໜ້າທີ່ສ່ວຍສາອາກອນຈົນຮອດປີທີ່ສິ້ນສຸດວັນທີ 31 ທັນວາ 2013.

ວິທີການກຳນົດອາກອນກຳໄລທີ່ນຳໃຊ້ໂດຍບໍລິສັດຕັ້ງແຕ່ປີ 2014

ຕັ້ງແຕ່ປີ 2014, ມູນຄ່າຂອງໜີ້ຕ້ອງສົ່ງອາກອນຂອງປີປັດຈຸບັນແມ່ນອີງຕາມກຳໄລທີ່ຖືກເສຍອາກອນໃນປີ. ກຳໄລທີ່ຖືກເສຍອາກອນຂອງບໍລິສັດໃນປີແມ່ນຕ່າງຈາກກຳໄລທີ່ໄດ້ສະແດງໃນໃບລາຍງານຜົນໄດ້ຮັບເນື່ອງຈາກກຳໄລດັ່ງກ່າວ ບໍ່ລວມເອົາບັນດາລາຍຮັບທີ່ຖືກເສຍອາກອນ ຫຼື ລາຍຈ່າຍທີ່ອະນຸຍາດໃຫ້ຫັກຂອງປີຜ່ານມາ ແລະ ຍັງບໍ່ລວມລາຍການທີ່ຖືກຍົກເວັ້ນ ອາກອນ ຫຼື ບໍ່ອະນຸຍາດໃຫ້ຫັກ. ອາກອນທີ່ຕ້ອງຈ່າຍພາຍໃນປີດັ່ງກ່າວຂອງບໍລິສັດແມ່ນຖືກຄິດໄລ່ໂດຍນຳໃຊ້ອັດຕາອາກອນຕາມກົດໝາຍ ນະມື້ອອກເອກະສານລາຍງານສະບັບນີ້.

ການສົມທຽບລະຫວ່າງ ກຳໄລກ່ອນຫັກອາກອນ ແລະ ກຳໄລທີ່ຖືກເສຍອາກອນມີດັ່ງນີ້:

	ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2016	*ສະກຸນເງິນ: ກີບ ສຳລັບໄລຍະ 3 ເດືອນ ວັນທີ 31 ມີນາ 2015*
ກຳໄລກ່ອນຫັກອາກອນ	**7,498,142,985**	**17,825,433,804**
ດັດແກ້ເພື່ອເພີ່ມກຳໄລທາງບັນຊີ		
ເງິນແຮສຳລັບໜີ້ສົງໄສ	-	-
ກຳໄລທີ່ຖືກເສຍອາກອນ	**7,498,142,985**	**17,825,433,804**
ລາຍຈ່າຍອາກອນກຳໄລທີ່ຄາດຄະເນໄວ້		
ພາຍໃນປີ	**1,424,647,167**	**3,386,832,422**
ອາກອນກຳໄລຄ້າງຈ່າຍໃນຕົ້ນປີ	1,075,091,380	3,007,437,172
ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ	-	-
ອາກອນກຳໄລຕ້ອງຈ່າຍທ້າຍປີ (ບົດອະທິບາຍເລກທີ 18)	**2,499,738,547**	**6,394,269,594**

28. ອາກອນກຳໄລ (ຕໍ່)

ການແຈ້ງເສຍອາກອນປະຈຳປີຂອງບໍລິສັດແມ່ນຕ້ອງໄດ້ຮັບການໄລ່ລຽງໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ເນື່ອງຈາກການນຳໃຊ້ກົດໝາຍແລະລະບຽບການອາກອນມີຫຼາຍປະເພດການເຄື່ອນໄຫວຈຶ່ງຖືກນຳໃຊ້ຫຼາຍຮູບແບບ, ມູນຄ່າທີ່ສະແດງໃນເອກະສານລາຍງານການເງິນອາດມີການປ່ຽນແປງຫຼັງຈາກມື້ໄລ່ລຽງຄັ້ງສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

29. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນໄລຍະມີດັ່ງນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ສະກຸນເງິນ: ກີບ* *ຈຳນວນ*
ທ່ານຈັນທອນ ສິດທິໄຊ	ຜູ້ອຳນວຍການໃຫຍ່ບໍລິສັດແລະຜູ້ຖືຮຸ້ນເດີມ	ຈ່າຍໃບບານ	11,339,877,700
ບໍລິສັດຮ່ວມທຶນການຄ້າຂາເຂົ້າ-ຂາອອກ ຈຳກັດ	ເຈົ້າຂອງຮ່ວມ	ເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ	6,000,000,000
		ເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ	2,770,867,413
		ລາຍຮັບຈາກດອກເບ້ຍເງິນກູ້	354,739,656
		ລາຍຮັບຈາກການໃຫ້ເຊົ່າ	68,321,916
			-
ບໍລິສັດສິດທິໂລຈິດສຕິກ ລາວຈຳກັດ	ເຈົ້າຂອງຮ່ວມ	ເງິນກູ້ໃຫ້ພາກສ່ວນທີ່ກ່ຽວຂ້ອງ	15,373,493,359
		ຈ່າຍໃບບານ	523,444,213
		ລາຍຮັບຈາກດອກເບ້ຍເງິນກູ້	332,021,702
		ລາຍຮັບຈາກການຂາຍນ້ຳມັນ	741,948,000
ປ້ຳນ້ຳມັນໂພນທັນ (ພລັ 1)	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	606,275,000
		ລາຍຮັບຈາກການໃຫ້ເຊົ່າ	81,000,000
ປ້ຳນ້ຳມັນໜອງແຫ້ວ (ພລັ 2)	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	2,494,130,000
		ລາຍຮັບຈາກການໃຫ້ເຊົ່າ	51,000,000
ປ້ຳນ້ຳມັນພະຂາວ (ພລັ 3	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	7,332,570,000
		ລາຍຮັບຈາກການໃຫ້ເຊົ່າ	168,000,000
ປ້ຳນ້ຳມັນ ພະແຕງ (ພລັ 4)	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	2,367,850,000
		ລາຍຮັບຈາກການໃຫ້ເຊົ່າ	123,000,000
ປ້ຳນ້ຳມັນໜອງພະຍາ (ພລັ 7)	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	612,520,000
		ລາຍຮັບຈາກການໃຫ້ເຊົ່າ	45,000,000
ປ້ຳນ້ຳມັນດອນມາຍ (ພລັ 8)	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	5,665,199,999
		ລາຍຮັບຈາກການໃຫ້ເຊົ່າ	112,500,000

29. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນໄລຍະມີດັ່ງນີ້: (ຕໍ່)

ສະກຸນເງິນ: ກີບ

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*ຈຳນວນ*
ປ້ຳນ້ຳມັນພັລສ ໃໝ່ໂຮງ	ເຈົ້າຂອງຮ່ວມ	ລາຍຮັບຈາກການຂາຍນ້ຳມັນ	1,423,730,000
ປ້ຳນ້ຳມັນພັລສ ວັງວຽງ	ເຈົ້າຂອງຮ່ວມ	ຂາຍນ້ຳມັນ	2,393,150,000
ປ້ຳນ້ຳມັນພັລສ ເມືອງເງິນ	ເຈົ້າຂອງຮ່ວມ	ຂາຍນ້ຳມັນ	167,900,000
ປ້ຳນ້ຳມັນພັລສ ສຳພັນນາ	ເຈົ້າຂອງຮ່ວມ	ຂາຍນ້ຳມັນ	572,680,000
ປ້ຳນ້ຳມັນພັລສ ຍິວຫຼວງ	ເຈົ້າຂອງຮ່ວມ	ຂາຍນ້ຳມັນ	716,440,000

ຂໍ້ກຳນົດແລະເງື່ອນໄຂ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນຖືກປະຕິບັດບົນພື້ນຖານຂໍ້ຕົກລົງໃນສັນຍາ. ຍົກເວັ້ນໜີ້ຕ້ອງຮັບຈາກເງິນກູ້ທີ່ມີດອກເບ້ຍ, ຍອດເຫຼືອທ້າຍຍິ່ນໆ ນະມື້ອອກເອກະສານລາຍງານການເງິນແມ່ນເປັນລາຍການທີ່ບໍ່ມີຫຼັກຊັບຄ້ຳປະກັນ, ບໍ່ມີດອກເບ້ຍ ແລະ ຊຳລະດ້ວຍເງິນສົດ. ການຊຳລະລາຍຈ່າຍຈາກການດຳເນີນງານໃນນາມຂອງບໍລິສັດແມ່ນຕ່ຳທ້ານຽມດອກເບ້ຍ, ແລະ ເກັບຄືນອີງຕາມຕ່ຳໃຊ້ຈ່າຍຕົວຈິງ.

30. ລາຍໄດ້ຕໍ່ຮຸ້ນ

ມູນຄ່າຂອງລາຍໄດ້ພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ຈາກຜົນຫານລະຫວ່າງກຳໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນຂອງບໍລິສັດກັບຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນປີ.
ມູນຄ່າລາຍໄດ້ຕໍ່ຮຸ້ນທີ່ປັບຫຼຸດລົງແມ່ນຄິດໄລ່ຈາກຜົນຫານລະຫວ່າງກຳໄລຫຼັງຫັກອາກອນທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບເຈົ້າຂອງຮຸ້ນສາມັນຂອງບໍລິສັດ(ຫຼັງຈາກການຕັດແກ້ສຳລັບດອກເບ້ຍໃນການປ່ຽນເປັນຮຸ້ນບຸລິມະສິດ)ກັບຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນປີບວກໃຫ້ຈຳນວນສະເລ່ຍຂອງຮຸ້ນທີ່ສາມາດປ່ຽນເປັນຮຸ້ນສາມັນທີ່ອາດຈະອອກໂດຍປັບຈາກຮຸ້ນສາມັນເດີມທີ່ມີຄວາມສາມາດປັບຫຼຸດໄປເປັນຮຸ້ນສາມັນ.
ລາຍການດັ່ງລຸ່ມນີ້ສະແດງໃຫ້ເຫັນຂໍ້ມູນທີ່ໃຊ້ເຂົ້າໃນການຄິດໄລ່ລາຍໄດ້ຕໍ່ຮຸ້ນ:

	ສຳລັບສິ້ນສຸດວັນທີ 31 ມີນາ 2016
ກຳໄລສຸດທິຫຼັງຫັກອາກອນທີ່ຄາດວ່າຈະຕ້ອງໄດ້ຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນບົນພື້ນຖານລາຍໄດ້ຕໍ່ຮຸ້ນແບບພື້ນຖານ(ກີບ)	6,073,495,818
ຈຳນວນສະເລ່ຍຂອງຮຸ້ນສາມັນ(ຮຸ້ນຊື້ຄືນ)ສຳລັບລາຍໄດ້ (ຂາດທຶນ) ພື້ນຖານຕໍ່ຮຸ້ນ	235,000,000
ລາຍໄດ້ພື້ນຖານຕໍ່ຮຸ້ນ(ກີບ)	**26**

ບໍ່ມີລາຍການເຄື່ອນໄຫວໃດໆທີ່ສົ່ງຜົນສະທ້ອນເຖິງຮຸ້ນສາມັນ ຫຼື ຮຸ້ນທີ່ສາມາດປ່ຽນເປັນຮຸ້ນສາມັນໃນລະຫວ່າງມື້ສ້າງເອກະສານລາຍງານ ແລະ ນະມື້ສຳເລັດເອກະສານລາຍງານການເງິນ.

31. ຄ່າໝັ້ນສັນຍາ

ຄ່າໝັ້ນສັນຍາການເຊົ່າເພື່ອການດຳເນີນງານທີ່ບໍລິສັດເປັນຜູ້ເຊົ່າ

ບໍລິສັດມີສັນຍາເຊົ່າຫ້ອງການແລະປ້ຳນ້ຳມັນພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານ. ພັນທະຜູກພັນ/ຄ່າໝັ້ນສັນຍາທີ່ບໍລິສັດ ມີ ນະວັນທີ 31 ມີນາ 2016 ມີດັ່ງລຸ່ມນີ້:

		ສະກຸນເງິນ: ກີບ
	ສຳລັບສິ້ນສຸດ ວັນທີ 31 ມີນາ 2016	*ສຳລັບສິ້ນສຸດ ວັນທີ 31 ທັນວາ 2015*
ໜ້ອຍກວ່າ 1 ປີ	1,133,580,000	1,131,200,000
ແຕ່ 1 ຫາ 5 ປີ	4,025,031,000	4,017,840,000
ຫຼາຍກວ່າ 5 ປີ	22,434,459,000	11,447,920,000
	27,593,070,000	**16,596,960,000**

ຄ່າໝັ້ນສັນຍາການເຊົ່າເພື່ອການດຳເນີນງານທີ່ບໍລິສັດເປັນຜູ້ໃຫ້ເຊົ່າ

ບໍລິສັດ ມີປ້ຳນ້ຳມັນ ແລະ ມີລົດບັນທຸກຢູ່ພາຍໃຕ້ສັນຍາຊົ່າເພື່ອການດຳເນີນງານ. ໜີ້ຕ້ອງຮັບຄ່າເຊົ່າຕ່ຳສຸດໃນອະນາຄົດນະ ວັນທີ 31 ມີນາ 2016, ພາຍໃຕ້ສັນຍາເຊົ່າເພື່ອການດຳເນີນງານມີດັ່ງລຸ່ມນີ້:

		ສະກຸນເງິນ: ກີບ
	ສຳລັບສິ້ນສຸດ ວັນທີ 31 ມີນາ 2016	*ສຳລັບສິ້ນສຸດ ວັນທີ 31 ທັນວາ 2015*
ໜ້ອຍກວ່າ 1 ປີ	2,405,930,000	7,876,220,000
ແຕ່ 1 ຫາ 5 ປີ	14,971,460,000	19,499,680,000
ຫຼາຍກວ່າ 5 ປີ	13,256,520,000	16,863,480,000
	30,633,910,000	**44,239,380,000**

ຄ່າໝັ້ນສັນຍາກ່ຽວກັບລາຍຈ່າຍຂອງທຶນ

ນະວັນທີ 30 ມິຖຸນາ 2015, ບໍລິສັດມີຄ່າໝັ້ນສັນຍາສຳລັບການກໍ່ສ້າງປ້ຳນ້ຳມັນເຊິ່ງມີປະເມີນເປັນມູນຄ່າ 8.7 ຕື້ກີບ

ລາຄາຂາຍທີ່ໄດ້ກຳນົດໄວ້

ລາຄາຂາຍຂອງນ້ຳມັນຖືກກຳນົດໂດຍຄະນະບໍລິຫານຂອງບໍລິສັດ ແຕ່ບໍ່ສູງກວ່າເພດານລາຄາທີ່ກຳນົດ ແລະ ປະກາດອອກມາ ໂດຍ ກະຊວງການເງິນ ຂອງ ສປປ ລາວ.

32. ເຫດການພາຍຫຼັງວັນທີຂອງໃບສະຫຼຸບຊັບສິນບັດ

ບໍ່ໄດ້ມີເຫດການ ຫຼື ສະຖານະການໃດທີ່ສຳຄັນເກີດຂຶ້ນພາຍຫຼັງວັນທີ່ລ້ຽງໃບສະຫຼຸບຊັບສິນບັດ ທີ່ຈະສົ່ງຜົນກະທົບຫຼື ລ້ຽງ ຜົນກະທົບຮ້າຍແຮງຕໍ່ການດຳເນີນງານຫຼື ຜົນຂອງການດຳເນີນງານ ຫຼື ຖານະທາງການເງິນຂອງ ບໍລິສັດ.

33. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນນະວັນທີ 31 ມີນາ 2016 ແລະ ສິ້ນສຸດປີການບັນຊີ ດັ່ງກ່າວແມ່ນໄດ້ຖືກອະນຸມັດໂດຍ ຄະນະ ອຳນວຍການຂອງບໍລິສັດ ໃນວັນທີ 10 ພຶດສະພາ 2016.

ທ່ານ ນາງ ຈັນທະດອນ ເມກະສະຫວັນ
ຮັກສາການຫົວໜ້າຝ່າຍການເງິນ

ທ່ານ ຈັນທອນ ສິດທິໄຊ
ຜູ້ອຳນວຍການໃຫ່ຍບໍລິສັດ

10 ພຶດສະພາ 2016.